# ຄະນະພົວພັນຕ່າງປະເທດສູນກາງພັກ

## Committee for External Relations of the Party Central Committee


**I. ສະພາບການພົ້ນເດັ່ນຂອງພາກພື້ນ ແລະ ສາກົນ..........................................ໜ້າ 01 – 10**

**II. ການເຄື່ອນໄຫວຂອງການນຳພັກ ປະຊາຊົນ ປະຕິວັດລາວ.................................ໜ້າ 11 – 12**

**III. ການເຄື່ອນໄຫວວຽກງານອົງການຈັດຕັ້ງມະຫາຊົນຄະນະພົວພັນຕ່າງປະເທດສູນກາງພັກ...ໜ້າ 13**


ໃບຂ່າວຂອງຄະນະພົວພັນຕ່າງປະເທດສູນກາງພັກ
ປະຈຳເດືອນ **ຕຸລາ 2021**


**ສຳນັກງານ ຕັ້ງຢູ່ ບ້ານ ສີວິໄລ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ**

**Fax 021 414043, Email: Ri.dept.la@Gmail.com, Website: www.cerccp.org.la**

# I. ສະພາບການພົ້ນເດັ່ນຂອງພາກພື້ນ ແລະ ສາກົນ

**1. ສະພາບການພົ້ນເດັ່ນຢູ່ ສປປ ລາວ**

**1). ສະຖານະການໂຄວິດ-19**

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ໄດ້ອອກແຈ້ງການ ສະບັບເລກທີ 1330/ຫສນຍ, ລົງວັນທີ 15/10/2021 ເພື່ອໃຫ້ປະຊາຊົນລາວທົ່ວປະເທດ ສືບຕໍ່ປະຕິບັດຄຳສັ່ງ ສະບັບເລກທີ 15/ນຍ, ລົງວັນທີ 21/04/2021 ວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ຄວບຄຸມ ແລະ ກະກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດໂຄວິດ-19 ຈົນຮອດທ້າຍເດືອນ ຕຸລາ 2021. ໃນເດືອນ ຕຸລາ 2021 ການລະບາດຂອງພະຍາດໂຄວິດຍັງສືບຕໍ່ເພີ່ມຂຶ້ນ ໃນຊຸມຊົນ ໂດຍສະເພາະແມ່ນຢູ່ນະຄອນຫຼວງວຽງຈັນ, ຫຼວງພະບາງ, ບໍ່ແກ້ວ, ຫຼວງນ້ຳທາ, ແຂວງວຽງຈັນ, ສະຫວັນນະເຂດ. ຮອດວັນທີ 31 ຕຸລາ 2021, ທົ່ວປະເທດ ມີຜູ້ຕິດເຊື້ອສະສົມ 40,271 ເພີ່ມຂຶ້ນ 16,425 ຄົນ; ປິ່ນປົວຫາຍດີ 33,445 ຄົນເພີ່ມຂຶ້ນ 15,398 ຄົນ; ກຳລັງປິ່ນປົວຢູ່ໂຮງໝໍ 6,826 ຄົນ, ເສຍຊີວິດສະສົມທັງໝົດ 65 ຄົນ; ປະຊາຊົນລາວ ທີ່ໄດ້ສັກວັກແຊງຄົບ 2 ເຂັມ 2,836,565 ຄົນ, ໄດ້ສັກເຂັມທີໜຶ່ງ 3,301,109 ຄົນ. ພ້ອມກັນນັ້ນ, ລັດຖະບານສົມທົບກັບຂະແໜງສາທາລະນະສຸກ ຈະເລັ່ງສຸມໃສ່ການສັກວັກແຊງປ້ອງກັນ COVID-19 ຄົບ 2 ເຂັມ ໃຫ້ປະຊາຊົນທົ່ວປະເທດໃຫ້ໄດ້ 50% ໃນທ້າຍປີ 2021, ເຊິ່ງຮອດປັດຈຸບັນ, ເຂັມທຳອິດປະຕິບັດໄດ້ 44.54%, ສອງເຂັມ ປະຕິບັດໄດ້ 38.10%.

**2). ພິທີມອບ-ຮັບ ລົດໄຟລາວ - ຈີນ EMU**

ວັນທີ 16/10/ 2021, ລັດຖະບານ ສປປ ລາວ ຮ່ວມກັບສະຖານເອກອັກຄະລັດຖະທູດ ສປ ຈີນ ປະຈຳ ສປປ ລາວ ໄດ້ຈັດພິທີມອບ - ຮັບ ລົດໄຟລາວ - ຈີນ EMU ຂະບວນທຳອິດ ຊື່ຂະບວນ “ລ້ານຊ້າງ”. ໂຄງການກໍ່ສ້າງລົດໄຟ ລາວ-ຈີນ ແມ່ນໄດ້ກ້າວເຂົ້າສູ່ຂັ້ນຕອນການກວດກາຮັບຮອງ ແລະ ຈະກ້າວເຂົ້າສູ່ໄລຍະດຳເນີນການບໍລິການສັງຄົມຢ່າງເປັນທາງການໃນເດືອນ ທັນວາ 2021, ເຊິ່ງເປັນການປະກາດໃຫ້ຮູ້ຢ່າງທົ່ວເຖິງວ່າ ສປປ ລາວ ກຳລັງກ້າວເຂົ້າສູ່ສະໄໝໃໝ່ ແຫ່ງການຂົນສົ່ງດ້ວຍທາງລົດໄຟ; ຂະບວນລົດໄຟລ້ານຊ້າງ ເປັນສັນຍາລັກໃໝ່ໃຫ້ແກ່ ສປປ ລາວ ບັນລຸຄວາມມັ່ງຄັ່ງເຂັ້ມແຂງ ເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນດີຂຶ້ນ. ລົດໄຟຂະບວນ “ລ້ານຊ້າງ” ສາມາດແລ່ນດ້ວຍຄວາມໄວສູງເຖິງ 160 ກມ/ຊມ, ປະກອບມີ 9 ຕູ້ ເຊັ່ນ: ຫົວຈັກລົດໄຟ, ຕູ້ບ່ອນນັ່ງປະເພດໜຶ່ງ ແລະ ຕູ້ຫ້ອງອາຫານ ຢ່າງລະ 1 ຕູ້, ຕູ້ບ່ອນນັ່ງປະເພດສອງ 6 ຕູ້ ເຊິ່ງທັງໝົດສາມາດບັນຈຸຜູ້ໂດຍສານໄດ້ 720 ຄົນ ແລະ ສາມາດເຊື່ອມຕໍ່ສອງຂະບວນລົດໄຟໄດ້ໃນເວລາທີ່ຕ້ອງການ. ທາງລົດໄຟ ລາວ - ຈີນ ເປັນໜຶ່ງ ໃນຂໍ້ລິເລີ່ມ “ໜຶ່ງແລວ ໜຶ່ງເສັ້ນທາງ” ຂອງຈີນ ກັບຍຸດທະສາດຫັນຈາກປະເທດທີ່ບໍ່ມີຊາຍແດນຕິດກັບທະເລ ເປັນປະເທດເຊື່ອມໂຍງເຊື່ອມຈອດຂອງລາວ ເຊິ່ງເລີ່ມຈາກນະຄອນຄຸນໝິງ ແຂວງຢຸນນານຂອງຈີນ ໄປຈົນສຸດຕອນໃຕ້ຢູ່ນະຄອນຫຼວງວຽງຈັນ, ມີຄວາມຍາວ ທັງໝົດ 422,4 ກິໂລແມັດ.

**3). ນາຍົກລັດຖະມົນຕີ ເຂົ້າຮ່ວມກອງປະຊຸມສຸດຍອດອາຊຽນ ຄັ້ງທີ 38 ແລະ 39 ແລະ ກອງປະຊຸມສຸດຍອດທີ່ກ່ຽວຂ້ອງ ແບບທາງໄກ**

ວັນທີ 26 ຕຸລາ 2021, ທີ່ ຫໍປະຊຸມແຫ່ງຊາດ, ທ່ານ ພັນຄຳ ວິພາວັນ, ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ໄດ້ນຳພາຄະນະຜູ້ແທນ ເຂົ້າຮ່ວມກອງປະຊຸມສຸດຍອດອາຊຽນ ຄັ້ງທີ 38 ແລະ 39 ແລະ ກອງປະຊຸມສຸດຍອດທີ່ປິ່ນອ້ອມ ແບບທາງໄກ ໂດຍການເປັນປະທານຂອງ ສົມເດັດ ຊຸນຕານ ຮາຈີ ຮັດຊານານ ໂບນເກຍ ແຫ່ງ ບຣູໄນດາຣູຊາລາມ ໃນຖານະປະທານອາຊຽນ ປີ 2021 ພາຍໃຕ້ຄຳຂວັນ “ພວກເຮົາຫ່ວງໄຍ, ພວກເຮົາກຽມພ້ອມ, ພວກເຮົາພ້ອມກັນຈະເລີນ”.

ໃນກອງປະຊຸມສຸດຍອດອາຊຽນ ຄັ້ງທີ 38, ຜູ້ນຳອາຊຽນ ໄດ້ແລກປ່ຽນຄຳຄິດຄຳເຫັນ ແລະ ຕີລາຄາສູງຕໍ່ຄວາມຄືບໜ້າໃນການສ້າງປະຊາຄົມອາຊຽນ ເຊິ່ງໄດ້ຮັບໝາກຜົນທີ່ສຳຄັນໃນຫຼາຍດ້ານໃນທ່າມກາງສະພາບການແຜ່ລະບາດຂອງພະຍາດໂຄວິດ-19 ເປັນຕົ້ນແມ່ນ: ຜົນສຳເລັດການກະກຽມໃນເບື້ອງຕົ້ນ ເພື່ອເລີ່ມຂະບວນການຮ່າງວິໄສທັດປະຊາຄົມອາຊຽນ ຫຼັງປີ 2025, ການສ້າງຕັ້ງບັນດາສູນສາທາລະນະສຸກ ແລະ ກອງທຶນຕອບໂຕ້ພະຍາດໂຄວິດ-19 ກໍຄືພາວະສຸກເສີນ ແລະ ໄພພິບັດທາງທຳມະຊາດຕ່າງໆ, ການຮັດແໜ້ນການຮ່ວມມືເພື່ອຟື້ນຟູການເຊື່ອມຈອດ, ການສະໜອງແບບຕ່ອງໂສ້ ແລະ ການໄປມາຫາສູ່ ລະຫວ່າງປະຊາຊົນພາຍໃນພາກພື້ນ ໂດຍຜ່ານແຜນງານຟື້ນຟູອາຊຽນຮອບດ້ານ, ການສ້າງຂອບການຮ່ວມມືສຳລັບການເດີນທາງພາຍໃນອາຊຽນ ແລະ ອື່ນໆ; ບັນດາຜູ້ນຳ ຍັງໄດ້

ແລກປ່ຽນຄຳຄິດເຫັນກ່ຽວກັບການຮັບມືຕ້ານພະຍາດລະບາດ ໂຄວິດ-19, ເຊິ່ງ ທ່ານ ພັນຄຳ ວິພາວັນ ໄດ້ສະແດງຄວາມຂອບໃຈຕໍ່ບັນດາປະເທດສະມາຊິກອາຊຽນ ທີ່ໄດ້ໃຫ້ການຊ່ວຍເຫຼືອ ສປປ ລາວ ໃນດ້ານຕ່າງໆ ເພື່ອຮັບມືກັບພະຍາດໂຄວິດ-19 ເປັນຕົ້ນແມ່ນ ອຸປະກອນການແພດ, ວັກແຊງ ແລະ ການຊ່ວຍເຫຼືອດ້ານວິຊາການ ແລະດ້ານອື່ນໆ. ພ້ອມກັນນີ້, ກໍໄດ້ສະເໜີໃຫ້ປະເທດສະມາຊິກອາຊຽນ ສືບຕໍ່ຮັດແໜ້ນການຮ່ວມມືກັນ ເພື່ອສະກັດກັ້ນການແຜ່ລະບາດຂອງພະຍາດໂຄວິດ-19 ລວມທັງການສ້າງຄວາມເຂັ້ມແຂງໃຫ້ຂະແໜງສາທາລະນະສຸກ ແລະ ການສະໜອງວັກແຊງໃຫ້ພຽງພໍກັບຄວາມຕ້ອງການຂອງແຕ່ລະປະເທດສະມາຊິກ.

ສຳລັບກອງປະຊຸມສຸດຍອດອາຊຽນ ຄັ້ງທີ 39, ໄດ້ທົບທວນຄືນການຮ່ວມມື ລະຫວ່າງອາຊຽນ ກັບບັນດາປະເທດຄູ່ເຈລະຈາ, ໃນນັ້ນບັນດາຜູ້ນຳອາຊຽນ ໄດ້ຕີລາຄາສູງຕໍ່ບົດບາດສຳຄັນຂອງອາຊຽນໃນເອທີພາກພື້ນ ແລະສາກົນ ແລະ ສືບຕໍ່ໄດ້ຮັບຄວາມສົນໃຈຈາກບັນດາປະເທດນອກພາກພື້ນ ເຊິ່ງເຫັນໄດ້ຈາກການສະເໜີເຂົ້າເປັນພາຄີຂອງສົນທິສັນຍາໄມຕີຈິດ ແລະ ການຮ່ວມມືໃນອາຊີຕາເວັນອອກສ່ຽງໃຕ້ (Treaty of Amity and Cooperation in Southeast Asia - TAC), ການສະໝັກເປັນປະເທດຄູ່ຮ່ວມເຈລະຈາ ແລະ ຄູ່ຮ່ວມມືໃນລະດັບຕ່າງໆຂອງບັນດາປະເທດນອກພາກພື້ນ ທີ່ມີແນວໂນ້ມເພີ່ມຂຶ້ນ. ບົນຈິດໃຈນີ້, ທ່ານ ພັນຄຳ ວິພາວັນ ໄດ້ເນັ້ນໜັກໃຫ້ອາຊຽນເຊີດຊູຄັນທຸງຄວາມເປັນແກນກາງ, ຄວາມເປັນເອກະສັນ ແລະ ຄວາມສາມັກຄີຂອງອາຊຽນ ໃນການພົວພັນກັບພາຍນອກ ເພື່ອເຮັດໃຫ້ອາຊຽນເປັນປະຊາຄົມທີ່ເຂັ້ມແຂງ, ຍືນຍົງ ແລະ ເປັນສ່ວນໜຶ່ງທີ່ສຳຄັນຂອງການສົ່ງເສີມສັນຕິພາບ ແລະ ການຮ່ວມມືເພື່ອການພັດທະນາຂອງໂລກ; ບັນດາຜູ້ນຳອາຊຽນ ຍັງໄດ້ແລກປ່ຽນທັດສະນະຢ່າງກົງໄປກົງມາ ກ່ຽວກັບບັນຫາທີ່ພົ້ນເດັ່ນໃນພາກພື້ນ ແລະ ສາກົນທີ່ມີຄວາມສົນໃຈຮ່ວມກັນ, ລວມທັງບັນຫາການກໍ່ການຮ້າຍ, ໄພພິບັດທາງທຳມະຊາດ, ການປ່ຽນແປງດິນຟ້າອາກາດ ແລະ ອື່ນໆ.

ໃນໂອກາດນີ້, ທ່ານ ພັນຄຳ ວິພາວັນ ໄດ້ແຈ້ງໃຫ້ກອງປະຊຸມຊາບ ການປະກອບສ່ວນຂອງ ສປປ ລາວຈຳນວນໜຶ່ງແສນ ໂດລາສະຫະລັດ ເຂົ້າໃນກອງທຶນອາຊຽນ ເພື່ອຮັບມືກັບພະຍາດໂຄວິດ-19 ແລະ ຫ້າສິບພັນໂດລາສະຫະລັດ ຜ່ານສູນປະສານງານການຊ່ວຍເຫຼືອດ້ານມະນຸດສະທຳ ແລະ ໄພພິບັດອາຊຽນ (AHA) ປະກອບສ່ວນເຂົ້າໃນການລະດົມທຶນຊ່ວຍເຫຼືອດ້ານມະນຸດສະທຳໃຫ້ແກ່ ມຽນມາ ແລະ ຍັງໄດ້ນຳພາຄະນະຜູ້ແທນລາວເຂົ້າຮ່ວມກອງປະຊຸມສຸດຍອດອາຊຽນກັບປະເທດຄູ່ເຈລະຈາ ເປັນຕົ້ນ ອາຊຽນ-ສ.ເກົາຫຼີ ຄັ້ງທີ 22; ອາຊຽນ-ຈີນ ຄັ້ງທີ 24; ອາຊຽນ-ສະຫະລັດ ຄັ້ງທີ 9; ອາຊຽນ-ຍີ່ປຸ່ນ ຄັ້ງທີ 24; ອາຊຽນ-ອົດສະຕຣາລີ ຄັ້ງທີ 1; ອາຊຽນບວກສາມ (ຈີນ, ຍີ່ປຸ່ນ ແລະ ສ.ເກົາຫຼີ) ຄັ້ງທີ 24 ແລະ ກອງປະຊຸມສຸດຍອດອາຊີຕາເວັນອອກ (East Asia Summit) ຄັ້ງທີ 16 ໃນຮູບແບບທາງໄກ.

ກອງປະຊຸມສຸດຍອດອາຊຽນ ຄັ້ງທີ 38 ແລະ 39 ໄດ້ຮັບຮອງເອົາເອກະສານທີ່ສຳຄັນຫຼາຍສະບັບ ເປັນຕົ້ນແມ່ນ: ຖະແຫຼງການ ບັນດາ ເສຣີ ເບກາວັນ ວ່າດ້ວຍ ການຈັດຕັ້ງປະຕິບັດຂໍ້ລິເລີ່ມແບບຍຸດທະສາດ ແລະ ກວມລວມ ເພື່ອເຊື່ອມສານບັນດາຂອບການຮ່ວມມືອາຊຽນ ເພື່ອຮັບມືກັບໄພພິບັດ ແລະ ພາວະສຸກເສີນ, ຖະແຫຼງການຜູ້ນຳອາຊຽນ ວ່າດ້ວຍການຍຶດຖືຫຼັກການຮ່ວມມືຫຼາຍຝ່າຍ, ຖະແຫຼງການຜູ້ນຳອາຊຽນ ວ່າດ້ວຍ ການຮ່ວມມືເສດຖະກິດສີຟ້າ ແລະ ເອກະສານທີ່ສຳຄັນຈຳນວນໜຶ່ງ.

## 2. ສະພາບການພາກພື້ນ ແລະ ສາກົນ

### 1) ສະພາບການລະບາດຂອງເຊື້ອພະຍາດ ໂຄວິດ - 19 ໃນທົ່ວໂລກ

ຫຼາຍປະເທດທົ່ວໂລກ ຍັງສືບຕໍ່ປະເຊີນກັບການແຜ່ລະບາດຂອງພະຍາດໂຄວິດ-19, ເຊິ່ງຄະນະກຳມະການສຸກເສີນ ຂອງອົງການອະນາໄມໂລກ (WHO) ໄດ້ກ່າວວ່າ: COVID-19 ມີການພັດທະນາຢ່າງສັບສົນ, ຫຼາຍປະເທດກັບມາລະບາດອີກຄັ້ງ ເຖິງແມ່ນວ່າ ປະຊາກອນໂລກ ກວມ 47% ໄດ້ຮັບວັກແຊງເຂັມທີ 1 ແລ້ວກໍຕາມ, ຍັງຕ້ອງໃຊ້ເວລາອີກດົນ ຈຶ່ງຈະສາມາດກຳຈັດພະຍາດດັ່ງກ່າວໄດ້, ທີ່ສຳຄັນ ໄດ້ກວດພົບສາຍພັນໃໝ່ AY.4.2, ເຊິ່ງເປັນຊະນິດຍ່ອຍຂອງສາຍພັນ Delta ໃນ 42 ປະເທດແລ້ວ ແລະວ່າ ປະຊາຄົມໂລກ ຕ້ອງການງົບປະມານເຖິງ 23,4 ຕື້ໂດລາ ໃນອີກ 12 ເດືອນຂ້າງໜ້າ ເພື່ອຕໍ່ສູ້ກັບ Covid-19, ໂດຍໄດ້ຮຽກຮ້ອງໃຫ້ກຸ່ມ G20 ສະແດງຄວາມເປັນຜູ້ນຳສະໜອງທຶນດັ່ງກ່າວ. ຂົງເຂດອາຊີ ເປັນຂົງເຂດທີ່ມີການແຜ່ລະບາດຫຼາຍທີ່ສຸດ, ແຕ່ຖ້ານັບເປັນຕົວເລກ ປະເທດທີ່ຕິດເຊື້ອ ແລະ ເສຍຊີວິດຫຼາຍກວ່າໝູ່ ຍັງແມ່ນ ອາເມລິກາ, ອິນເດຍ ແລະ ບຣາຊິນ. ຮອດວັນທີ 31 ຕຸລາ 2021, ຜູ້ຕິດເຊື້ອທົ່ວໂລກທັງໝົດ 247,098,733 ຄົນ, ເພີ່ມຂຶ້ນ 13,148,848 ຄົນ, ເສຍຊີວິດ 5,009,777 ຄົນ, ເພີ່ມຂຶ້ນ 222,786 ຄົນ, ປິ່ນປົວຫາຍດີທັງໝົດ 223.830.208 ຄົນ, ເພີ່ມຂຶ້ນ 13,031,016 ທຽບໃສ່ເດືອນຜ່ານມາ. ຕໍ່ກັບ

ການສືບຕໍ່ແຜ່ລະບາດຂອງພະຍາດດັ່ງກ່າວ, ຫຼາຍປະເທດ ໄດ້ສືບຕໍ່ເລັ່ງໃຫ້ປະຊາຊົນພາຍໃນປະເທດຂອງຕົນ ສັກວັກແຊງ ເພື່ອປ້ອງກັນການຕິດເຊື້ອພະຍາດດັ່ງກ່າວ. ໃນນັ້ນ, ສິງກະໂປ ເປັນປະເທດທີ່ປະຕິບັດໄດ້ຫຼາຍທີ່ສຸດໃນໂລກ ກວມ 84 % ຂອງພົນລະເມືອງທີ່ເປັນຜູ້ໃຫຍ່ທັງໝົດ.

ສະຖານະການໂຄວິດ-19 ໃນບັນດາປະເທດສະມາຊິກອາຊຽນ ຍັງສືບຕໍ່ແຜ່ລະບາດ ເຊັ່ນ: ອິນໂດເນເຊຍ, ມາເລເຊຍ, ໄທ. ສໍາລັບ ສິງກະໂປ, ຜູ້ຕິດເຊື້ອໄດ້ເພີ່ມຂຶ້ນໃນໄລຍະທ້າຍເດືອນ ຕຸລາ 2021, ເຊິ່ງບາງມື້ສູງເຖິງ 5,000 ກວ່າຄົນ ເປັນຕົວເລກສູງສຸດຕໍ່ມື້ ນັບແຕ່ມີການລະບາດຂອງພະຍາດດັ່ງກ່າວ. ສິງກະໂປ ເປັນປະເທດທີ່ໄດ້ສັກວັກແຊງໃຫ້ປະຊາກອນ ຂອງຕົນ ກວມ 84%, ຍ້ອນໄດ້ຮັບວັກແຊງ ເຮັດໃຫ້ຜູ້ຕິດເຊື້ອບໍ່ມີອາການໜັກ; ຜູ້ທີ່ອາການໜັກ ແລະ ເສຍຊີວິດ ສ່ວນໃຫຍ່ແມ່ນຜູ້ທີ່ມີໂລກປະຈໍາຕົວ, ຂະນະດຽວກັນຈໍານວນໜຶ່ງ ບໍ່ສະແດງອາການໃດໆ.

ຕໍ່ການແຜ່ລະບາດ ຂອງພະຍາດໂຄວິດ-19, ຫຼາຍປະເທດ ໄດ້ເລີ່ມປັບຕົວ ເພື່ອໃຫ້ສາມາດໃຊ້ຊີວິດແບບ New Normal ເຊັ່ນ: ສ. ເກົາຫຼີ ໄດ້ປະກາດເປີດການຮຽນ-ການສອນ ແບບເຊິ່ງໜ້າເປັນປົກກະຕິ ແລະ ເປີດຖ້ຽວບິນໃນບັນດາແຂວງ ຂອງຕົນຄືນໃໝ່ ນັບແຕ່ ເດືອນ ພະຈິກ 2021 ເປັນຕົ້ນໄປ, ເຊິ່ງຄົນຕ່າງປະເທດ ແລະ ຄົນເກົາຫຼີຢູ່ຕ່າງປະເທດສາມາດເດີນທາງໂດຍຖ້ຽວບິນ ລະຫວ່າງປະເທດ ເຂົ້າ-ອອກ ສ.ເກົາຫຼີໄດ້ ຖ້າພວກເຂົາໄດ້ສັກວັກແຊງຄົບ ດ້ວຍວັກແຊງ Pfizer, Moderna, AstraZeneca, Johnson & Johnson ໃນໄລຍະ 2 ອາທິດກ່ອນການເດີນທາງ; ໄທ ກໍໄດ້ປະກາດ ຈະອະນຸຍາດໃຫ້ປະຊາຊົນ ຂອງ 60 ກວ່າປະເທດ ແລະ ແຂດແຄວ້ນເດີນທາງເຂົ້າປະເທດໄທໄດ້ ໂດຍບໍ່ຕ້ອງກັກບໍລິເວນ ເພື່ອຟື້ນຟູຂະແໜງການທ່ອງທ່ຽວ ແລະ ຊຸກຍູ້ເສດຖະກິດ ຂອງໄທ; ອິນໂດເນເຊຍ ໄດ້ປະກາດເປີດແຫຼ່ງທ່ອງທ່ຽວ ເກາະບາຫຼີ ນັບແຕ່ວັນທີ 14 ຕຸລາ 2021 ເປັນຕົ້ນໄປ ໂດຍອະນຸຍາດໃຫ້ນັກທ່ອງທ່ຽວ ຈາກ ສປ ຈີນ, ອິນເດຍ, ຍີ່ປຸ່ນ, ສ. ເກົາຫຼີ, ນູແວງເຊລັງ ແລະ ອີກຫຼາຍປະເທດ ຈາກເອີລົບຕາເວັນອອກ ແລະ ອ່າວອາຣັບ ສາມາດເຂົ້າໄປທ່ອງທ່ຽວຂົງເຂດດັ່ງກ່າວ.

**2) ສະພາບການໃນຂົງເຂດອາຊີ-ປາຊີຟິກ ແລະ ອາຟຣິກາ**

ໃນວັນທີ 25 ຕຸລາ 2021, ກອງທັບຊູດັງ ໄດ້ໃຊ້ລູກປືນແທ້ ຍິງສະຫຼາຍຜູ້ປະທ້ວງຕໍ່ຕ້ານລັດຖະບານ ໃນນະຄອນຫຼວງ ຄາຕູມ ຂອງຊູດັງ ເຮັດໃຫ້ຜູ້ປະທ້ວງແຕກຕື່ນແລ່ນໜີ, ມີຜູ້ເສຍຊີວິດ 7 ຄົນ, ບາດເຈັບປະມານ 140 ຄົນ. ພົນເອກ ອັບເດວ ຟັດຕາ ອາບູຮານ, ຜູ້ນໍາກອງທັບຊູດັງ ທັງເປັນຫົວໜ້າສະພາປົກຄອງ ຊູດັງ ໄດ້ປະກາດພາວະສຸກເສີນໃນປະເທດ, ຈັບກຸມນາຍົກລັດຖະມົນຕີຂອງຊູດັງ ແລະ ເຈົ້າໜ້າທີ່ລະດັບສູງ ຂອງລັດຖະບານຮັກສາການ ຂອງ ຊູດັງ ໂດຍອ້າງວ່າ ເພື່ອຢຸດຕິຄວາມຂັດແຍ່ງທາງການເມືອງ ແລະ ຈະສືບຕໍ່ການປ່ຽນຜ່ານເປັນປະຊາທິປະໄຕ. ການລັດຖະປະຫານຄັ້ງນີ້ ເປັນຄັ້ງທີ 35 ຂອງ ຊູດັງ ຕັ້ງແຕ່ປີ 1956 ທີ່ກອງທັບ ໄດ້ໂຄ່ນລົ້ມປະທານາທິບໍດີ ໂອມາ ອາວບາຊີ ທີ່ປົກຄອງຊູດັງ ເກືອບ 30 ປີ. ຄວາມຂັດແຍ່ງລະຫວ່າງລັດຖະບານທະຫານ ກັບປະຊາຊົນຊູດັງ ມີຄວາມເຄັ່ງຕຶງມາຕະຫຼອດ ເຊິ່ງປະຊາຊົນໄດ້ຮຽກຮ້ອງໃຫ້ລັດຖະບານທະຫານ ປ່ຽນຜ່ານໄປສູ່ປະຊາທິປະໄຕ. ການລັດຖະປະຫານຄັ້ງຫຼ້າສຸດນີ້ ເກີດຂຶ້ນພາຍຫຼັງ ຜູ້ແທນພິເສດອາເມລິກາປະຈໍາອາຟຣິກາ ໄດ້ພົບກັບພົນເອກ ອັບເດວ ຟັດຕາ ອາບູຮານ, ຜູ້ນໍາກອງທັບຊູດັງ, ຫົວໜ້າສະພາປົກຄອງຊູດັງ ແລະ ທ່ານ ຮາມດັອກ, ນາຍົກລັດຖະມົນຕີຊູດັງ ເພື່ອປຶກສາຫາລືກ່ຽວ ກັບຂະບວນການປະຊາທິປະໄຕໃນ ຊູດັງ. ຫຼ້າສຸດ, ທ່ານ ແອນໂຕນີໂອ ກູເຕີເຣສ, ເລຂາທິການອົງການສະຫະປະຊາຊາດ, ອາເມລິກາ ແລະ ລາຊະອານາຈັກອັງກິດ ໄດ້ປະນາມການລັດຖະປະຫານດັ່ງກ່າວ, ໂຄສົກກະຊວງຕ່າງປະເທດອາເມລິກາ ໄດ້ປະກາດຢຸດຕິການຊ່ວຍເຫຼືອຊູດັງ ມູນຄ່າ 700 ລ້ານໂດລາສະຫະລັດ ລວມທັງຍົກເລີກໂຄງການອື່ນໆ ແລະ ຈະຢຸດຕິສາຍພົວພັນທັງໝົດ ກັບລັດຖະບານຊູດັງ, ຮຽກຮ້ອງໃຫ້ ຊູດັງ ກັບຄືນສູ່ລະບອບການປົກຄອງປະຊາທິປະໄຕ. ສ່ວນປະຊາຊົນຊູດັງ ຍັງຢືນຢັນມຸ່ງໜ້າປະທ້ວງ, ໃນຂະນະທີ່ຜູ້ນໍາທະຫານຊູດັງ ໄດ້ອອກມາປະຕິເສດວ່າ ບໍ່ໄດ້ກໍ່ລັດຖະປະຫານ ແຕ່ເປັນຄວາມພະຍາຍາມແກ້ໄຂຂະບວນການປ່ຽນຜ່ານສູ່ປະຊາທິປະໄຕຊູດັງ ໃຫ້ເປັນໄປຢ່າງຖືກຕ້ອງ.

ວັນທີ 03/10/2021, ທ່ານ ໂຣດິໂກ ດູເຕີເຕ, ປະທານາທິບໍດີ ຟີລິບປິນ, ປະທານພັກປະຊາທິປະໄຕປະຊາຊົນຟີລິບປິນ (Philippine Democratic Party – Laban) ໄດ້ປະກາດວ່າ ຈະບໍ່ລົງສະໝັກເລືອກຕັ້ງຊີງຕໍາແໜ່ງປະທານາທິບໍດີຟີລິບປິນ ທີ່ຈະຈັດຂຶ້ນໃນ ປີ 2022, ເນື່ອງຈາກ ທ່ານ ດູເຕີເຕ ດໍາລົງຕໍາແໜ່ງປະທານາທິບໍດີ ຄົບ 01 ສະໄໝ (06 ປີ) ຕາມລັດຖະທໍາມະນູນ ຂອງ ຟີລິບປິນແລ້ວ. ນັກວິເຄາະການເມືອງ ໃຫ້ທັດສະນະວ່າ ທ່ານ ໂຣດິໂກ ດູເຕີເຕ ຈະລົງສະໝັກຊີງຕໍາແໜ່ງຮອງປະທານາທິບໍດີ ແລະ ຈະສົ່ງ ທ່ານ ນາງ Sara Duterte – Carpio, ຜູ້ເປັນລູກສາວ, ທັງເປັນເຈົ້າຄອງນະຄອນ Davao, ລົງສະໝັກຊີງຕໍາແໜ່ງປະທານາທິບໍດີຟີລິບປິນ. ມາເຖິງວັນທີ 05/10/2021,

ມີພຽງ 05 ທ່ານ ໄດ້ລົງທະບຽນສະໝັກຮັບເລືອກຕັ້ງຊີງຕຳແໜ່ງປະທານາທິບໍດີຟີລິປິນ ປະກອບມີ ທ່ານ ນາງ Leni Pobredo, ຮອງປະທານາທິບໍດີ ຟີລິປິນ; ທ່ານ Many Pacquiao, ນັກມວຍທີ່ມີຊື່ສຽງ; ທ່ານ Francisco Domagosoa, ເຈົ້າຄອງນະຄອນຫຼວງ ມະນີລາ; ທ່ານ Panfilo Lacson, ສະມາຊິກສະພາ, ອະດີດລັດຖະມົນຕີປ້ອງກັນຄວາມສະຫງົບ ແລະ ທ່ານ Ferdinand Marcos Jr, ອະດີດເຈົ້າແຂວງ, ອະດີດສະມາຊິກສະພາ ແລະ ເຄີຍລົງສະໝັກຊີງຕຳແໜ່ງຮອງປະທານາທິບໍດີ ປີ 2016 ຜ່ານມາ. ການ ເລືອກຕັ້ງປະທານາທິບໍດີຟີລິປິນ ຈະຈັດຂຶ້ນໃນວັນທີ 09/05/2022.

ວັນທີ 04/10/2021, ສະພາແຫ່ງຊາດຂອງຍີ່ປຸ່ນ (National Diet) ໄດ້ລົງຄະແນນສຽງຮັບຮອງ ທ່ານ Fumio Kishida, ປະທານພັກເສລີປະຊາທິປະໄຕ (LDP) ເປັນນາຍົກລັດຖະມົນຕີ ຄົນທີ 100 ຂອງຍີ່ປຸ່ນ ດ້ວຍຄະແນນ 311 ຈາກຄະແນນສຽງທັງໝົດ 458 ສຽງ. ທ່ານນາຍົກລັດຖະມົນຕີ Fumio Kishida ໄດ້ປັບປຸງຄະນະລັດຖະບານຊຸດໃໝ່ 13 ທ່ານ ຈາກທັງໝົດ 20 ທ່ານ, ໃນນັ້ນ ໄດ້ແຕ່ງຕັ້ງ ທ່ານ Toshimitsu Motegi ໃຫ້ສືບຕໍ່ເປັນລັດຖະມົນຕີຕ່າງປະເທດ, ທ່ານ Nobuo Kishi ສືບຕໍ່ເປັນລັດຖະມົນຕີປ້ອງກັນປະເທດ. ຫຼັງຈາກນັ້ນ, ທ່ານ Fumio Kishida ໄດ້ປະກາດຍຸບສະພາ ໃນວັນທີ 14 ຕຸລາ 2021 ແລະ ໄດ້ເລີ່ມຫາສຽງ ແຕ່ວັນທີ 19 ຕຸລາ 2021 ເພື່ອກະກຽມໃຫ້ແກ່ການເລືອກຕັ້ງທົ່ວປະເທດ ໃນວັນທີ 31 ຕຸລາ 2021. ພາຍຫຼັງ ທ່ານ Fumio Kishida ຖືກຮັບຮອງເປັນນາຍົກລັດຖະມົນຕີ, ໄດ້ສົນທະນາທາງໂທລະສັບກັບ ທ່ານ ໂຈ ໄບເດີນ, ປະທານາທິບໍດີອາເມລິກາ ປຶກສາຫາລືສາຍພົວພັນມິດຕະພາບ, ເສີມຂະຫຍາຍການຮ່ວມມືໃນທຸກຂົງເຂດ, ປ້ອງກັນຊາດ, ຄວາມໝັ້ນຄົງ ເພື່ອປະຕິບັດຍຸດທະສາດ ອິນໂດ - ປາຊີຟິກ. ສອງຝ່າຍ ຍັງໄດ້ແລກປ່ຽນສະພາບສາກົນເຊັ່ນ: ບັນຫາຂົງເຂດທະເລຈີນໃຕ້, ບັນຫາແຫຼມເກົາຫຼີ, ການຮ່ວມມືຕ້ານການແຜ່ລະບາດຂອງພະຍາດໂຄວິດ-19 ແລະ ການປ່ຽນແປງດິນຟ້າອາກາດ.

ວັນທີ 2 ຕຸລາ 2021, ເຮືອດຳນ້ຳພະລັງງານນິວເຄລຍ ຂອງອາເມລິກາ ໄດ້ໄປຕຳເອົາວັດຖຸບາງຢ່າງໃນທະເລຈີນໃຕ້ ເຮັດໃຫ້ລູກເຮືອໄດ້ຮັບບາດເຈັບ 11 ຄົນ. ພາຍຫຼັງເຫດການດັ່ງກ່າວ, ສປ ຈີນ ໄດ້ຮຽກຮ້ອງໃຫ້ກອງທັບອາເມລິກາຊີ້ແຈງລາຍລະອຽດຂອງເຫດການ ແລະ ແຈ້ງຈຸດປະສົງພາລະກິດເຂົ້າມາໃນພື້ນທີ່ດັ່ງກ່າວ, ພ້ອມທັງໄດ້ກ່າວໂທດອາເມລິກາ ທີ່ເປີດເຜີຍຂໍ້ມູນຊັກຊ້າ (ເຫດເກີດວັນທີ 2 ຕຸລາ ແຕ່ເຜີຍແຜ່ໃນວັນທີ 7 ຕຸລາ) ແລະ ປິດບັງຂໍ້ມູນບາງຢ່າງ, ເຊິ່ງສະແດງເຖິງຄວາມບໍ່ໂປ່ງໃສ ໃນການລາດຕະເວນທາງນ້ຳ ແລະ ທາງອາກາດ ໂດຍອ້າງເສລີພາບທາງທະເລ ແລະ ທາງອາກາດ ເຊິ່ງເປັນຕົ້ນເຫດເຮັດໃຫ້ເກີດເຫດການດັ່ງກ່າວ ແລະ ເປັນໄພຄຸກຄາມຕໍ່ສັນຕິພາບໃນພາກພື້ນ. ອາເມລິກາ ໄດ້ພິດພາດໃຫ້ເກີດເຫດການໃນລັກສະນະດຽວກັນນີ້ ໃນປີ 2017 ເຖິງ 4 ຄັ້ງ, ໃນນັ້ນ ມີຄັ້ງໜຶ່ງເຮັດໃຫ້ນ້ຳມັນຮົ່ວໄຫຼລົງອ່າວທະເລຍີ່ປຸ່ນ ແລະ ປີ 2020 ເກີດຂຶ້ນ 1 ຄັ້ງ, ສົ່ງຜົນໃຫ້ມີຜູ້ເສຍຊີວິດຈາກເຫດການ 5 ຄັ້ງລວມ 26 ຄົນ; ເຫດການຄັ້ງນີ້ ເປັນຄັ້ງທີ 6.

ວັນທີ 06-10/10/2021, ຄະນະຜູ້ແທນຝຣັ່ງ ນຳໂດຍ ທ່ານ Alian Richard, ປະທານກຸ່ມມິດຕະພາບໄຕຫວັນ (Taiwan Friendship Group), ສະມາຊິກສະພາ; ທ່ານ Tony Abbot, ອະດີດນາຍົກລັດຖະມົນຕີ ອົດສະຕຣາລີ; ທ່ານ Keiji Furuya, ສະມາຊິກສະພາ ຂອງປະເທດ ຍີ່ປຸ່ນ, ຕົວແທນຈາກປະເທດ ອິນເດຍ, ສ.ເກົາຫຼີ ແລະ ຕົວແທນປະເທດສະມາຊິກ ອາຊຽນ ຈຳນວນໜຶ່ງ ໄດ້ເຂົ້າຮ່ວມກອງປະຊຸມປະຈຳປີ Yushan Forum ຄັ້ງທີ 05 ທີ່ເຂດປົກຄອງຕົນເອງ ໄຕຫວັນ. ກອງປະຊຸມ ໄດ້ປຶກສາຫາລືກ່ຽວກັບຄວາມໝັ້ນຄົງໃນພາກພື້ນອິນໂດ-ປາຊີຟິກ ແລະ ການຟື້ນຟູເສດຖະກິດ ຫຼັງການແຜ່ລະບາດຂອງພະຍາດໂຄວິດ-19. ໃນໂອກາດດັ່ງກ່າວ, ທ່ານ Alian Richard ຍັງພົບປະສອງຝ່າຍກັບ ທ່ານນາງ Tsai Ing – Weng, ຜູ້ບໍລິຫານເຂດປົກຄອງໄຕຫວັນ ແລະ ໄດ້ສະແດງຄວາມຮັບຮູ້ໄຕຫວັນ ເປັນປະເທດໜຶ່ງ ເຊິ່ງໄດ້ປະກອບສ່ວນສຳຄັນເຂົ້າໃນຫຼາຍຂົງເຂດຂອງໂລກ ເຊັ່ນ: ເສດຖະກິດ, ວິທະຍາສາດ, ການພັດທະນາເຕັກໂນໂລຊີ ແລະ ສຸກຂະສຶກສາ. ສ່ວນ ທ່ານ Tony Abbot, ອະດີດນາຍົກລັດຖະມົນຕີ ອົດສະຕຣາລີ, ກໍໄດ້ພົບປະສອງຝ່າຍກັບ ທ່ານ ນາງ Tsai Ing – Weng ແລະ ຈະສະໜັບສະໜູນປະຊາທິປະໄຕໃນໄຕຫວັນ, ຈະຊຸກຍູ້ ໄຕຫວັນ ເຂົ້າຮ່ວມສົນທິສັນຍາການຄ້າເສລີ CPTPP ແລະ ຈະຊ່ວຍຮຽກຮ້ອງໃຫ້ສາກົນສະໜັບສະໜູນໄຕຫວັນ. ພາຍຫຼັງການຢ້ຽມຢາມ ຂອງ ຄະນະຜູ້ແທນຕ່າງປະເທດ ແລະ ກອງປະຊຸມ Yushan Forum ຢູ່ໄຕຫວັນ, ໃນວັນທີ 09/10/2021, ໂຄສົກກະຊວງການຕ່າງປະເທດ ຈີນ ໄດ້ປະນາມຢ່າງແຂງແຮງ ຕໍ່ຄະນະຜູ້ແທນຝຣັ່ງ ແລະ ອົດສະຕຣາລີ ທີ່ສະໜັບສະໜູນປະຊາທິປະໄຕໃນໄຕຫວັນ ແລະ ຮັບຮູ້ໄຕຫວັນ ເປັນປະເທດໜຶ່ງ, ເຊິ່ງຄຳເຫັນທັງໝົດດັ່ງກ່າວ ເປັນການປຸກລະດົມການແຍກດິນແດນ ແລະ ອະທິປະໄຕ ຂອງ ຈີນ, ສ້າງຄວາມປັ່ນປ່ວນ-ຂັດແຍ່ງ ລະຫວ່າງເຂດປົກຄອງຕົນເອງ ຂອງ ຈີນ; ຮຽກຮ້ອງໃຫ້ ທ່ານ Tony Abbot ແລະ ຄະນະຜູ້ແທນຝຼັ່ງ

ຢຸດຕິແຊກແຊງກິດຈະການພາຍໃນ ຂອງ ສປ ຈີນ, ເຄົາລົບຫຼັກການອະທິປະໄຕຈີນດຽວ ເພື່ອຄວາມສະຫງົບພາຍໃນ ແລະ ພາກພື້ນ.

ວັນທີ 14 - 17/10/2021, ຈີນ ແລະ ລັດເຊຍ ໄດ້ຮ່ວມກັນຊ້ອມຮົບປະຈຳປີ ໃນທະເລຍີ່ປຸ່ນ ເຊິ່ງໄດ້ເດີນທາງຜ່ານຊ່ອງແຄບ Tsugaru ລະຫວ່າງ ເກາະ Honsu ແລະ Hokaido ຂອງປະເທດຍີ່ປຸ່ນ. ການຊ້ອມຮົບດັ່ງກ່າວ, ປະກອບມີເຮືອຮົບຂອງສອງປະເທດເຂົ້າຮ່ວມ 10 ລຳ, ເປັນການຊ້ອມຮົບແບບໂຈມຕີ, ການສື່ສານ, ການຊ່ວຍເຫຼືອທາງທະເລ ແລະ ອື່ນໆ. ການຊ້ອມຮົບຄັ້ງນີ້ ມີຂະໜາດໃຫຍ່ທີ່ສຸດ ໃນກອບການຮ່ວມມືສອງຝ່າຍ ຈີນ-ລັດເຊຍ, ເປັນການສົ່ງເສີມຄວາມໄວ້ເນື້ອເຊື່ອໃຈກັນດ້ານຍຸດທະສາດການທະຫານ ກໍຄືການຮ່ວມມືຂອງກອງທັບຂອງສອງປະເທດໃຫ້ສູງຂຶ້ນ, ທັງເປັນການຝຶກແອບ ແລະ ຍົກສູງຄວາມສາມາດໃນການເຄື່ອນໄຫວທາງທະເລຮ່ວມກັນ. ຂະນະດຽວກັນ, ໃນວັນທີ 15/10/2021, ເຮືອຮົບ HSS Chafee ຂອງອາເມລິກາ ໄດ້ລາດຕະເວນມາໃກ້ກັບເຂດນ່ານນໍ້າທີ່ ລັດເຊຍ ແລະ ຈີນ ກຳລັງດຳເນີນການຊ້ອມຮົບ ດ້ວຍໄລຍະຫ່າງກັນພຽງ 60 ແມັດ. ເຮືອຮົບລັດເຊຍ ໄດ້ເຕືອນໄປຍັງເຮືອຮົບອາເມລິກາຫຼາຍຄັ້ງ ຈຶ່ງຍອມຖອຍອອກຈາກພື້ນທີ່ດັ່ງກ່າວ. ອາເມລິກາ ອ້າງວ່າ ການກະທຳດັ່ງກ່າວ ເປັນການລາດຕະເວນປົກກະຕິໃນນ່ານນໍ້າສາກົນ.

ວັນທີ 19/10/2021, ສປປ ເກົາຫຼີ ໄດ້ທົດລອງຍິງລູກສອນໄຟພິໄສໃກ້ ຮຸ່ນ SLBM ຊະນິດໃໝ່ຈຳນວນ 01 ລູກ ສາມາດຍິງໄກເຖິງ 590 ກິໂລແມັດ, ດ້ວຍຄວາມສູງ 60 ກິໂລແມັດ, ເຊິ່ງໄດ້ຍິງຈາກເຮືອດຳນໍ້າ " 8.24 Yongung " ເປັນເຮືອດຳນໍ້າລຳທຳອິດທີ່ສຳເລັດການຕິດຕັ້ງຖານຍິງລູກສອນໄຟທີ່ໄດ້ທົດລອງ ໃນ 05 ປີທີ່ຜ່ານມາ. ລູກສອນໄຟດັ່ງກ່າວ, ເປັນລູກສອນໄຟຊະນິດໃໝ່ ທີ່ຄວບຄຸມການເຄື່ອນທີ່ດ້ວຍລະບົບເຕັກໂນໂລຊີທີ່ທັນສະໄໝ, ເປັນການເພີ່ມທະວີໃຫ້ແກ່ການປະຕິບັດງານພາກພື້ນນໍ້າ ຂອງກອງທັບເຮືອ ແລະ ເປັນການຍົກລະດັບທາງດ້ານວຽກງານປ້ອງກັນປະເທດ ຂອງ ສປປ ເກົາຫຼີ. ຂະນະດຽວກັນ, ທູດພິເສດ ຂອງ ອາເມລິກາ, ສ.ເກົາຫຼີ ແລະ ຍີ່ປຸ່ນ ກໍໄດ້ພົບປະສາມຝ່າຍ ທີ່ ນະຄອນຫຼວງວໍຊິງຕັນ, ສະຫະລັດ ອາເມລິກາ ປຶກສາຫາລືກ່ຽວກັບບັນຫາໃນແຫຼມເກົາຫຼີ ແລະ ພະຍາຍາມຫາວິທີການຢຸດຕິສົງຄາມລະຫວ່າງສອງເກົາຫຼີຢ່າງເປັນທາງການ. ສ່ວນສະພາຄວາມໝັ້ນຄົງ ສປຊ ໄດ້ເປີດກອງປະຊຸມສຸກເສີນຕາມຄວາມຮຽກຮ້ອງຂອງ ອາເມລິກາ, ຝຣັ່ງ ແລະ ອັງກິດ ເພື່ອປຶກສາຫາລືກ່ຽວກັບຜົນສຳເລັດໃນການທົດລອງສູກສອນໄຟ ຂອງ ສປປ ເກົາຫຼີ, ແຕ່ບໍ່ມີຖະແຫຼງການຮ່ວມ, ເນື່ອງຈາກ ບັນດາປະເທດຕາເວັນຕົກ ແລະ ລັດເຊຍ, ສປ ຈີນ ຕ່າງຝ່າຍຕ່າງມີຄຳເຫັນທີ່ແຕກຕ່າງກັນ. ວັນທີ 22-23/10/2021, ທ່ານ Sung Kim, ທູດພິເສດ ຂອງ ລັດຖະບານ ສ.ອາເມລິກາ, ຜູ້ຮັບຜິດຊອບນະໂຍບາຍຕໍ່ ສປປ ເກົາຫຼີ ໄດ້ເດີນທາງໄປ ສ.ເກົາຫຼີ, ພົບປະກັບ ທ່ານ Noh Kyu-duk, ຜູ້ຮັບຜິດຊອບວຽກງານສັນຕິພາບຢູ່ແຫຼມເກົາຫຼີ ເພື່ອປຶກສາຫາລືກ່ຽວກັບ ສະຖານະການຢູ່ແຫຼມເກົາຫຼີ ແລະ ການປ້ອງກັນປະເທດລະດັບໃໝ່ຢ່າງບໍ່ເປັນທາງການກັບ ສ.ເກົາຫຼີ. ນອກນີ້, ສອງຝ່າຍ ຍັງໄດ້ປຶກສາຫາລືກ່ຽວກັບ ການຖະແຫຼງການປະກາດສິ້ນສຸດສົງຄາມ ເພື່ອຢຸດຕິພາວະສົງຄາມໃນແຫຼມເກົາຫຼີ.

### 3) ສະພາບການ ໃນຂົງເຂດເອີລົບ-ອາເມລິກາ

ສະຫະພາບເອີລົບ ກຳລັງປະເຊີນກັບວິກິດການຂາດແຄນພະລັງງານ ຍ້ອນຫຼາຍປັດໄຈ ເຊັ່ນ : ຄວາມຕ້ອງການດ້ານພະລັງງານເພີ່ມຂຶ້ນ (ຍ້ອນຫຼາຍປະເທດໃນອີຢູ ເລີ່ມຫຼຸດຜ່ອນບັນດາມາດຕະການປ້ອງກັນໂຄວິດ ເຮັດໃຫ້ປະຊາຊົນເລີ່ມກັບມາດຳລົງຊີວິດເປັນປົກກະຕິ), ການສຳຮອງກາສທຳມະຊາດໃນສະຫະພາບເອີລົບ ຕໍ່າກວ່າປົກກະຕິ, ພະລັງງານທາງເລືອກ (ພະລັງງານລົມ) ຜະລິດໄດ້ໜ້ອຍ, ອີກປັດໄຈໜຶ່ງ, EU ໄດ້ກ່າວຫາວ່າເປັນຍ້ອນລັດເຊຍ ຕັ້ງໃຈກັກຕຸນການສຳຮອງກາສທຳມະຊາດ ແລະ ສົ່ງໄປ EU ໜ້ອຍກວ່າປົກກະຕິ ເຮັດໃຫ້ຕະຫຼາດອີຢູ ບໍ່ສາມາດຕອບສະໜອງໄດ້ຕາມຄວາມຕ້ອງການຂອງພົນລະເມືອງຂອງຕົນ, ເຊິ່ງອີຢູ ຍັງຕ້ອງໄດ້ເພິ່ງພາພະລັງງານຈາກລັດເຊຍ 41% ຈາກພະລັງງານທີ່ ອີຢູ ນຳເຂົ້າທັງໝົດ. ຝ່າຍກ່ຽວຂ້ອງ ຂອງລັດເຊຍ ອອກມາຕອບໂຕ້ວ່າ ອີຢູ ບໍ່ຄວນຖິ້ມໂທດໃຫ້ປະເທດອື່ນ ຄວນເບິ່ງບັນຫາພາຍໃນອີຢູເອງ ໃນການຈັດການກັບກາສສຳຮອງຂອງຕົນ; ລັດເຊຍ ບໍ່ໄດ້ໃຊ້ພະລັງງານເປັນອາວຸດທາງການເມືອງ ແມ່ນແຕ່ໃນຍຸກສົງຄາມເຢັນ, ຍັງໄດ້ປະຕິບັດຕາມສັນຍາ. ໃນປີ 2021, ລັດເຊຍ ຍັງໄດ້ເພີ່ມການສົ່ງອອກພະລັງງານໄປ ອີຢູ ເພີ່ມ 15% ແລະ ຈະເພີ່ມປະລິມານຂຶ້ນອີກ ຫາກວ່າມີການສະເໜີຈາກ ອີຢູ. ສ່ວນທໍ່ສົ່ງກາສ North Stream 2 ທີ່ສົ່ງຈາກ ລັດເຊຍ ຜ່ານທະເລບານຕິກ ໄປຍັງ ເຢຍລະມັນ ມີຄວາມຍາວເຖິງ 1200 ກິໂລແມັດ ແລະ ໄດ້ສ້າງສຳເລັດແລ້ວ ແຕ່ຍັງບໍ່ໄດ້ເປີດໃຊ້ງານ ຍ້ອນຫຼາຍປະເທດໃນສະຫະພາບເອີລົບທີ່ມີຄວາມຂັດແຍ່ງກັບ ລັດເຊຍ ກ່ຽວກັບທໍ່ສົ່ງກາສດັ່ງກ່າວ. ທໍ່ສົ່ງດັ່ງກ່າວ ຈະສາມາດສົ່ງກາສໄປຫາບັນດາປະເທດ ເອີລົບ ໄດ້ 55,000 ລ້ານແມັດກ້ອນ ຕໍ່ປີ, ຖ້າລວມກັບທໍ່ສົ່ງກາສ North Stream 1 ທີ່ໃຊ້ໃນປັດຈຸບັນນີ້ ຈະສາມາດສົ່ງກາສທຳ

ມະຊາດໄດ້ທັງໝົດ 110,000 ລ້ານແມັດກ້ອນ ຕໍ່ປີ. ແນວໃດກໍຕາມ, ນັກວິເຄາະ ໄດ້ໃຫ້ທັດສະນະວ່າ ສະຫະພາບເອີລົບ ຍັງຕ້ອງອາໄສພະລັງງານຈາກລັດເຊຍ ແລະວ່າ ລັດເຊຍ ຢູ່ໃນທ່າໄດ້ປຽບ ເພາະຖ້າຫາກວ່າ ອີຢູ ຈະຊື້ກາສແຫຼວ (LNG) ຈາກອາເມລິກາ, ລາຄາສູງກວ່າກາສຈາກ ລັດເຊຍ. ນອກຈາກວິກິດການທາງດ້ານພະລັງງານ, ອີຢູ ຍັງສືບຕໍ່ປະເຊີນກັບຄວາມຄິດເຫັນທີ່ແຕກຕ່າງກັນ ກ່ຽວກັບບັນຫາຜູ້ອົບພະຍົບ, ເຊິ່ງສະມາຊິກລັດຖະສະພາ ເອີຣົບ ກ່າວວ່າ ບັນດາປະເທດເຂດຊາຍແດນຮອບນອກ ຂອງ EU ຕ້ອງບໍ່ເອົາບັນຫາສິ່ງຄືນອົບພະຍົບເປັນກົດໝາຍ ເປັນຕົ້ນ ສະຖານະການຜູ້ອົບພະຍົບ ຢູ່ ຊາຍແດນ ຂອງ ອີຢູ ທີ່ຕິດກັບ ເບລາຣຸດຊີ ກຳລັງຮ້າຍແຮງຂຶ້ນໃນປັດຈຸບັນນີ້, ບັນດາປະເທດສະມາຊິກ ບໍ່ຄວນສົ່ງເສີມຊຸກຍູ້ອົບພະຍົບກັບຄືນປະເທດ ໃຫ້ກາຍເປັນກົດໝາຍຄືດັ່ງ ຮົງກາຣີ ທີ່ໄດ້ກະທຳໄປແລ້ວໃນປີ 2015. ໃນວັນທີ 16 ຕຸລາ ຜ່ານມາ, ທ່ານ ນາງ Yiva Johansson, ກຳມະການອີຢູ ຮັບຜິດຊອບວຽກງານພາຍໃນອີຢູ ໄດ້ຮຽກທູດໂປໂລຍ, ລິດຕົວນີ ແລະ ລັດເວຍ ເຂົ້າພົບ ຕໍ່ກໍລະນີການປະຕິບັດກັບຜູ້ອົບພະຍົບ ທີ່ຂ້າມມາແຕ່ຊາຍແດນ ຂອງເບລາລຸດຊີ ຢ່າງໄຮ້ຄວາມຮັບຜິດຊອບດ້ານມະນຸດສະທຳ. ໃນຂະນະທີ່ ທ່ານ Mariusz Blaszczak, ລັດຖະມົນຕີກະຊວງປ້ອງກັນປະເທດ ໂປໂລຍ ປະກາດໃນ Twitter ເມື່ອວັນທີ 25 ຕຸລາ ຜ່ານມາວ່າ ໂປໂລຍ ກຳລັງສົ່ງທະຫານເຂົ້າໄປຍັງ ຊາຍແດນທີ່ຕິດກັບ ເບລາຣຸດຊີ ຕື່ມອີກ 2.500 ຄົນ ໃຫ້ເປັນ 10.000 ຄົນ ເພື່ອຕ້ານການອົບພະຍົບຂ້າມຊາຍແດນທີ່ຜິດກົດໝາຍມາຈາກ ເບລາຣຸດຊີ.

ວັນທີ 04/10/2021, ກອງທັບລັດເຊຍ ໄດ້ສຳເລັດການທົດລອງຍິງລູກສອນໄຟ Zircon ຈາກເຮືອດຳນ້ຳທີ່ຂັບເຄື່ອນດ້ວຍພະລັງງານ ນິວເຄຼຍ ຄວາມໄວເໜືອສຽງ ຫຼື ໄຮເປີໂຊນິກ ໃນເຂດນ່ານນ້ຳສາກົນ ຂອງມະຫາສະໝຸດອາກຕິກ. ທ່ານ ວາລາດີເມຍ ປູຕິນ, ປະທານາທິບໍດີລັດເຊຍ ມີຄຳເຫັນວ່າ ໂຄງການດັ່ງກ່າວ ແມ່ນໜຶ່ງໃນແຜນຍຸດທະສາດຍົກລະດັບສັກກະຍະພາບການປ້ອງກັນປະເທດ ຂອງລັດເຊຍ. ລູກສອນໄຟ Zircon ມີຄວາມໄວເຖິງ 9.800 ກິໂລແມັດຕໍ່ຊົ່ວໂມງ, ໄວກວ່າສຽງ 8 ເທົ່າ, ໂຈມຕີເປົ້າໝາຍໃນໄລຍະ 1.000 ກິໂລແມັດ ໄດ້ຢ່າງແມ່ນຢຳ. ລັດເຊຍມີລູກສອນໄຟໄຮເປີໂຊນິກ 03 ລຸ່ນຄື: Zircon, Avangard ແລະ Kinzhal.

ວັນທີ 18/10/2021, ທ່ານ Sergey Lavrov, ລັດຖະມົນຕີຕ່າງປະເທດລັດເຊຍ ໄດ້ປະກາດຢຸດຕິການປະຕິບັດໜ້າທີ່ການທູດຢູ່ສຳນັກງານອົງການນາໂຕ ແລະ ຫ້ອງການຕາງໜ້າ ຂອງນາໂຕ ປະຈຳ ລັດເຊຍ ແຕ່ວັນທີ 01/11/2021 ເປັນຕົ້ນໄປ. ເຫດການດັ່ງກ່າວ ເກີດຂຶ້ນຫຼັງຈາກທີ່ ອົງການນາໂຕ ໄດ້ຂັບໄລ່ນັກການທູດລັດເຊຍຈຳນວນ 08 ທ່ານ ອອກຈາກສຳນັກງານດັ່ງກ່າວ ໂດຍກ່າວຫາວ່າ ພວກກ່ຽວເປັນສາຍສືບລັບ ຂອງ ລັດເຊຍ. ທ່ານ Heiko Maas, ລັດຖະມົນຕີຕ່າງປະເທດ ເຢຍລະມັນ ໄດ້ສະແດງຄວາມເສຍໃຈຕໍ່ກັບການຕັດສິນໃຈດັ່ງກ່າວຂອງລັດເຊຍ ເພາະຍິ່ງຈະເຮັດໃຫ້ການພົວພັນລັດເຊຍ - ນາໂຕ ເຄັ່ງຕຶງຂຶ້ນ. ວັນທີ 20/10/2021, ທ່ານ Jens Stoltenberg, ເລຂາທິການໃຫຍ່ອົງການນາໂຕ ມີຄຳເຫັນວ່າ ພັນທະມິດນາໂຕ ຍັງຕ້ອງການປຶກສາຫາລື ກັບລັດເຊຍ ເພື່ອຮ່ວມກັນແກ້ໄຂບັນຫາດັ່ງກ່າວ.

ວັນທີ 29/10/21, ນັບແຕ່ລາຊະອານາຈັກອັງກິດ ໄດ້ຖອນຕົວອອກຈາກສະຫະພາບເອີລົບຕັ້ງແຕ່ປີ 2016 ເປັນຕົ້ນມາ, ໜຶ່ງໃນບັນຫາທີ່ຍັງຍືດເຍື້ອ ຄືບັນຫາການແບ່ງປັນການທຳການປະມົງໃນນ່ານນ້ຳ, ໃນຂະນະທີ່ອັງກິດ ໄດ້ຄອບຄອງນ່ານນ້ຳຫຼາຍກວ່າປະເທດອື່ນໃນ EU. ຕາມການຕົກລົງກັນ, ຫາກປະເທດໃດຈະໄປທຳການປະມົງໃນເຂດການປົກຄອງ ຂອງອີກປະເທດອື່ນ ຕ້ອງໄດ້ຮັບການອະນຸຍາດຈາກອີກຝ່າຍ. ຫຼ້າສຸດ, ຝຣັ່ງ ໄດ້ຈັບກຸມເຮືອປະມົງຂອງອັງກິດ 2 ລຳ ໃນວັນທີ 27 ຕຸລາ ຜ່ານມາ ໂດຍອ້າງວ່າບໍ່ມີໃບອະນຸຍາດໃນການປະມົງຈາກຝຣັ່ງ, ສ້າງຄວາມບໍ່ພໍໃຈຕໍ່ ອັງກິດ ແລະ ໄດ້ຮຽກເອກອັກຄະລັດຖະທູດຝຣັ່ງ ປະຈຳນະຄອນຫຼວງລອນດອນ ເຂົ້າພົບ ເພື່ອຊີ້ແຈງບັນຫາດັ່ງກ່າວ. ໃນຂະນະທີ່ ຝຣັ່ງ ໄດ້ກ່າວວ່າ ອັງກິດ ບໍ່ປະຕິບັດຕາມການຕົກລົງກັນ ໂດຍການບໍ່ອອກໃບອະນຸຍາດໃຫ້ຊາວປະມົງຝຣັ່ງ ຕາມຈຳນວນທີ່ຝຣັ່ງຂໍໄປ ໃນເດືອນກັນຍາ 2021 ຜ່ານມາ ແລະ ວ່າຈະເຂັ້ມງວດຕື່ມໃນການກວດກາເຮືອປະມົງ ແລະ ລົດຂົນສົ່ງຕ່າງໆ ຂອງອັງກິດຫຼາຍຂຶ້ນ. ນັກວິເຄາະໄດ້ໃຫ້ທັດສະນະວ່າ ການທີ່ຝຣັ່ງ ກຳລັງດຳເນີນການເຂັ້ມງວດດັ່ງກ່າວ ມີເຫດຜົນດ້ານການເມືອງ ເນື່ອງຈາກ ຝຣັ່ງຈະມີການເລືອກຕັ້ງປະທານາທິບໍດີ ໃນປີ 2022, ແລະ ຊາວປະມົງເຂດພື້ນທີ່ດັ່ງກ່າວມີສ່ວນສຳຄັນ ແກ່ຖານສຽງການເລືອກຕັ້ງປະທານາທິບໍດີໃນຕໍ່ໜ້າ, ແລະບັນຫາຝຣັ່ງ ບໍ່ພໍໃຈກ່ອນໜ້ານີ້ ທີ່ ອັງກິດ ເຂົ້າຮ່ວມຂໍ້ຕົກລົງ Aukus ຮ່ວມກັບ ອາເມລິກາ ແລະ ອົດສະຕຣາລີ ທີ່ສົ່ງຜົນໃຫ້ຝຣັ່ງ ເສຍຜົນປະໂຫຍດ ມູນຄ່າ 37 ພັນລ້ານໂດລາສະຫະລັດ ເນື່ອງຈາກອົດສະຕຣາລີ ຍົກເລີກຂໍ້ຕົກລົງຊື້ເຮືອດຳນ້ຳຈາກຝຣັ່ງ.

**4) ສະພາບການໃນຂົງເຂດຕາເວັນອອກກາງ**

ພາຍຫຼັງອາເມລິກາ ໄດ້ຖອນທະຫານຂອງຕົນ ອອກຈາກອາຟະການິດສະຖານໃນວັນທີ 31 ສິງຫາ 2021 ຜ່ານມາ, ຫຼາຍຝ່າຍລ້ວນແຕ່ຄຳນວນວ່າ ອາຟະການິດສະຖານ ອາດຈະກາຍເປັນບ່ອນລີ້ຊ້ອນຂອງກຸ່ມກໍ່ການຮ້າຍຕ່າງໆ ເຊິ່ງຈະເຮັດໃຫ້ອາຟະການິດສະຖານ ແລະ ບັນດາປະເທດໃກ້ຄຽງ ໄດ້ຮັບຜົນກະທົບ. ຫຼ້າສຸດ, ໄດ້ເກີດເຫດລະເບີດຂ້າຕົວຕາຍ ໃນເມືອງ ຄຸນດຸດ ຂອງອາຟະການິດສະຖານ ໃນວັນທີ 8 ຕຸລາ 2021 ເຮັດໃຫ້ມີຜູ້ເສຍຊີວິດຈຳນວນໜຶ່ງ, ເຊິ່ງກອງກຳລັງອິດສະລາມ ຫຼື IS ອ້າງວ່າຢູ່ເບື້ອງຫຼັງເຫດການດັ່ງກ່າວ. ຂະນະທີ່, ທ່ານ ຣາເມຍຄານ ມຸດຕາຄີ, ຮັກສາການລັດຖະມົນຕີຕ່າງປະເທດອາຟະການິດສະຖານ ໄດ້ພົບປະກັບຄະນະຜູ້ແທນອາເມລິກາ ໃນນະຄອນຫຼວງ ໂດຮາ ຂອງ ກາຕາ ໃນວັນທີ 10 ຕຸລາ 2021, ເປັນການພົບປະເຊິ່ງໜ້າ ຄັ້ງທຳອິດ ຂອງຜູ້ແທນທັງສອງຝ່າຍ ນັບແຕ່ອາເມລິກາໄດ້ຖອນທະຫານ ຂອງຕົນອອກຈາກອາຟະການິດສະຖານ, ຝ່າຍຕາລີບັນ ໄດ້ຮຽກຮ້ອງໃຫ້ ອາເມລິກາຍົກເລີກການອາຍັດຊັບສິນ ຂອງ ທະນາຄານກາງອາຟະການິດສະຖານທີ່ຝາກໄວ້ທີ່ອາເມລິກາ ໃນມູນຄ່າກວ່າ 9,500 ລ້ານໂດລາສະຫະລັດ ເພື່ອນຳມາພັດທະນາເສດຖະກິດ ພາຍໃນປະເທດ ແລະ ຮຽກຮ້ອງໃຫ້ອາເມລິກາ ເຄົາລົບອະທິປະໄຕເໜືອນ່ານຟ້າຂອງອາຟະການິດສະຖານ, ບໍ່ແຊກແຊງກິດຈະການພາຍໃນອາຟະການິດສະຖານ ແລະ ເນັ້ນໜັກເຖິງຄວາມສຳຄັນໃນການຊ່ວຍເຫຼືອດ້ານມະນຸດສະທຳ. ສ່ວນຝ່າຍອາເມລິກາ ໄດ້ແລກປ່ຽນກ່ຽວກັບບັນຫາຄວາມໝັ້ນຄົງ, ການກຳຈັດກຸ່ມກໍ່ການຮ້າຍ, ບັນຫາສິດທິມະນຸດ ໂດຍສະເພາະແມ່ນຜູ້ຍິງ ແລະ ເດັກຍິງ, ເຊິ່ງອາເມລິກາຈະຍົກລະດັບການຊ່ວຍເຫຼືອໃນດ້ານດັ່ງກ່າວ ລວມເຖິງການບໍລິຈາກວັກແຊງຈຳນວນໜຶ່ງ ເຖິງແມ່ນວ່າອາເມລິກາຍັງບໍ່ຍອມຮັບລັດຖະບານຕາລີບັນກໍຕາມ. ປັດຈຸບັນ, ມີລັດເຊຍ, ຈີນ, ອີຣານ, ຕວັກກີ, ປາກີດສະຖານ, ແລະ ກາຕາ ທີ່ໄດ້ປະກາດຮັບຮູ້ລັດຖະບານ ຂອງກຸ່ມຕາລີບັນ. ພ້ອມນັ້ນ, ວັນທີ 26/10/21, ທ່ານ Zamir Kabulov, ທູດພິເສດຂອງ ປະທານາທິບໍດີ ລັດເຊຍ ຮັບຜິດຊອບວຽກງານ ອາຟະການິດສະຖານ ກ່າວໃນກອງປະຊຸມຖະແຫຼງຂ່າວ ໃນວັນທີ 25 ຕຸລາ 2021 ໄດ້ຮຽກຮ້ອງໃຫ້ປະເທດຕາເວັນຕົກພົວພັນກັບຕາລີບັນ, ບໍ່ຄວນອອກຫ່າງຈາກ ອາຟະການິດສະຖານ; ແມ່ນໄລຍະເວລາທີ່ດີທີ່ສຸດໃນທາງການທູດ ທີ່ ເອີຣົບ ຈະກັບຄືນມາມີບົດບາດໃນອາຊີກາງ. ນອກຈາກນັ້ນ, ໃນກອງປະຊຸມ ຍັງໄດ້ປຶກສາຫາລືກ່ຽວກັບ ສະພາບການໃນ ອາຟະການິດສະຖານ ທີ່ລັດເຊຍເປັນເຈົ້າພາບຮ່ວມກັບ ກຸ່ມຕາລີບັນ, ຈີນ, ອີຣານ, ປາກີດສະຖານ ແລະ ບັນດາປະເທດໃນພາກພື້ນ ໃນວັນທີ 20/10/ 2021, ທ່ານ Sergey Lavrov, ລັດຖະມົນຕີຕ່າງປະເທດລັດເຊຍ ໄດ້ຮຽກຮ້ອງໃຫ້ ລັດຖະບານອາຟະການິດສະຖານພາຍໃຕ້ກຸ່ມຕາລີບັນ ຈັດຕັ້ງມາດຕະການຮັກສາຄວາມໝັ້ນຄົງ ເພື່ອປ້ອງກັນກຸ່ມກໍ່ການຮ້າຍ. ສ່ວນບັນດາປະເທດ ອື່ນໆໄດ້ສະເໜີໃຫ້ຈັດກອງປະຊຸມຜູ້ໃຫ້ທຶນສາກົນ ພາຍໃຕ້ການສະໜັບສະໜູນຈາກ ສະຫະປະຊາຊາດ ແລະ ຮຽກຮ້ອງໃຫ້ສ້າງຕັ້ງລັດຖະບານອາຟະການິດສະຖານທີ່ສົມບູນ ເພື່ອເປັນເງື່ອນໄຂເບື້ອງຕົ້ນໃຫ້ແກ່ການສ້າງຄວາມປອງດອງແຫ່ງຊາດ. ໃນຂະນະທີ່, ທ່ານ ຫວາງອີ້, ທີ່ປຶກສາແຫ່ງລັດ, ລັດຖະມົນຕີກະຊວງການຕ່າງປະເທດຈີນ ໄດ້ພົບປະກັບທ່ານ Mullah Abdul Ghani Baradar, ຮອງນາຍົກລັດຖະມົນຕີອາຟະການິສຖານຢູ່ນະຄອນຫຼວງໂດຮາ; ຮຽກຮ້ອງກຸ່ມຕາລີບັນ ໃຫ້ເປີດກວ້າງຄວາມເຫັນອົກເຫັນໃຈ ແລະ ການຮ່ວມກັນກັບຝ່າຍຕ່າງໆ, ສ້າງປະເທດສັນຕິພາບ, ປົກປ້ອງສິດທິຂອງແມ່ຍິງ ແລະ ເດັກນ້ອຍຢ່າງຈິງຈັງ, ປະຕິບັດນະໂຍບາຍມິດຕະພາບກັບບັນດາປະເທດບ້ານໃກ້ເຮືອນຄຽງ, ສ້າງປະເທດທີ່ທັນສະໄໝຕາມຄວາມຕ້ອງການຂອງປະຊາຊົນ.

ວັນທີ 25/10/2021, ທາງການ ສ.ອາເມລິກາ ໄດ້ກ່າວຫາວ່າ ອີຣານ ຢູ່ເບື້ອງຫຼັງການໂຈມຕີດ້ວຍເຄື່ອງບິນບໍ່ມີຄົນຂັບ (ໂດຣນ) ໃສ່ຄ້າຍທະຫານຂອງຕົນໃນ al-Tanf ເຂດພາກໃຕ້ຂອງ ຊີຣີ, ທັງມີສ່ວນພົວພັນກັບການໂຈມຕີ 5 ຄັ້ງຜ່ານມາ ໃສ່ຄ້າຍທະຫານ ສ.ອາເມລິກາ ແລະ ສະຖານທີ່ພັກເຊົາຂອງກອງກຳລັງຝ່າຍຕໍ່ຕ້ານຊີຣີ, ເຊິ່ງເກີດຂຶ້ນໃນທ່າມກາງຄວາມເຄັ່ງຕຶງ ລະຫວ່າງ ອາເມລິກາ ແລະ ອີຣານ ກຳລັງປຶກສາຫາລືຂໍ້ຕົກລົງນິວເຄຼຍອີຣານ ປີ 2015. ຄ້າຍທະຫານດັ່ງກ່າວ ຂອງ ສ.ອາເມລິກາ ເປັນຄ້າຍຝຶກໃຫ້ແກ່ກອງກຳລັງຊີລີ ເພື່ອປາບປາມກຸ່ມ IS, ເຊິ່ງເປັນເສັ້ນທາງເຊື່ອມຕໍ່ທີ່ສຳຄັນ ຂອງກອງກຳລັງໜູນໂດຍອີຣານ ໄປຍັງພາກໃຕ້ຂອງ ລີບັງ ແລະ ອິດສະລາແອນ. ຫຼ້າສຸດ, ອີຣານໄດ້ປະກາດວ່າຈະກັບຄືນສູ່ການເຈລະຈາ ເພື່ອຟື້ນຟູຂໍ້ຕົກລົງນິວເຄລຍ 2015.

ການພົວພັນອິດສະລາແອັນ ແລະ ປາແລັດສະຕິນ ຍັງສືບຕໍ່ເຄັ່ງຕຶງ, ວັນທີ 11 ຕຸລາ 2021, ໂຄສົກຂອງກຸ່ມ Hamas ໃນປາແລັດສະຕິນ ໄດ້ກ່າວວ່າ ຄອບຄົວນັກໂທດຊາວອິດສະລາແອັນ ຈະບໍ່ສາມາດພົບກັບລູກເມຍຂອງຕົນໄດ້ ຈົນກວ່າ ອິດສະລາແອັນ ຈະຕອບຮັບການສະເໜີຂອງກຸ່ມ Hama ວ່າດ້ວຍຂໍ້ຕົກລົງແລກປ່ຽນນັກໂທດ, ພ້ອມທັງຮຽກຮ້ອງໃຫ້ ອິດສະລາແອັນ ຍົກເລີກມາດຕະການລົງໂທດຕໍ່ຊາວປາແລັດສະຕິນ ໃນຄ້າຍຄຸມຂັງ ແລະ ມອບຊາກສົບຊາວປາແລັດສະຕິນ ຕາມຂໍ້ຕົກລົງດັ່ງກ່າວ.

**3. ການເຄື່ອນໄຫວຂອງບັນດາພັກເພື່ອນມິດຍຸດທະສາດ**

**1) ພັກກອມມູນິດຫວຽດນາມ**

ວັນທີ 04 – 07 /10/2021, ຄະນະບໍລິຫານງານສູນກາງພັກ ກອມມູນິດຫວຽດນາມ ໄດ້ໄຂກອງປະຊຸມຄົບຄະນະເທື່ອທີ 4 ສະໄໝທີ XIII ໂດຍການເປັນປະທານ ຂອງ ສະຫາຍ ຫງວຽນຟູຈ້ອງ, ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ. ກອງປະຊຸມ ໄດ້ພິຈາລະນາ, ປຶກສາຫາລື ແລະ ປະກອບຄໍາຄິດເຫັນຕໍ່ບັນຫາສໍາຄັນຄື: (1) ການປ້ອງກັນ, ຄວບຄຸມການລະບາດຂອງພະຍາດໂຄວິດ-19 ໃນສະພາບການໃໝ່; (2) ສະພາບການພັດທະນາເສດຖະກິດ-ສັງຄົມ ປີ 2021, ຄາດຄະເນແຜນການພັດທະນາ ເສດຖະກິດ-ສັງຄົມ ປີ 2022; (3) ສະພາບການຈັດຕັ້ງປະຕິບັດງົບປະມານແຫ່ງລັດປີ 2021, ຄາດຄະເນງົບປະມານແຫ່ງລັດປີ 2022 ແລະ ແຜນການ ການເງິນ-ງົບປະມານແຫ່ງລັດ 3 ປີ 2022-2024; (4) ແຜນນະໂຍບາຍເລື່ອນກໍານົດເວລາຈັດຕັ້ງປະຕິບັດການປະຕິຮູບເງິນເດືອນ ຕາມມະຕິເລກທີ 27-NQ/TW ຂອງກອງປະຊຸມສູນກາງເທື່ອທີ 7 ສະໄໝທີ XII; (5) ສືບຕໍ່ຍູ້ແຮງວຽກງານກໍ່ສ້າງ, ປັບປຸງປົວແປງພັກ, ສະກັດກັ້ນ, ຕິຖອຍການເຊື່ອມທາດຂາດຄຸນດ້ານແນວຄິດການເມືອງ, ຄຸນສົມບັດ, ແບບແຜນການດໍາລົງຊີວິດ, ບັນດາປະກົດການ “ຫັນປ່ຽນເອງ”, “ປ່ຽນແປງເອງ” ຢູ່ພາຍໃນ; (6) ປັບປຸງ, ເພີ່ມເຕີມ ຂໍ້ກໍານົດຂອງກົມການເມືອງ ສະບັບເລກທີ 47-QD/TW, ລົງວັນທີ 01/11/2011 ກ່ຽວກັບຂໍ້ຫ້າມສໍາລັບສະມາຊິກພັກ ແລະ ບາງບັນຫາສໍາຄັນອື່ນໆຈໍານວນໜຶ່ງ.

ວັນທີ 19/10/2021, ຄະນະຊີ້ນໍາ ວ່າດ້ວຍການສ້າງບັນດາຫົວຂໍ້ສະເພາະທີ່ຂຶ້ນກັບໂຄງການ “ຍຸດທະສາດການກໍ່ສ້າງ ແລະ ປັບປຸງບູລະນະລັດແຫ່ງອໍານາດກົດໝາຍສັງຄົມນິຍົມຫວຽດນາມ ຮອດປີ 2030, ທິດທາງຮອດປີ 2045” ໂດຍການເປັນປະທານຂອງ ສະຫາຍ ເວືອງດິ່ງເຫວະ, ກໍາມະການກົມການເມືອງ, ປະທານສະພາແຫ່ງຊາດ, ຫົວໜ້າຄະນະຊີ້ນໍາກອງປະຊຸມ ໄດ້ພິຈາລະນາຮ່າງບົດລາຍງານບັນດາຫົວຂໍ້ສະເພາະ ເປັນຕົ້ນ ແມ່ນຫົວຂໍ້ທີ 10 “ປັບປຸງບູລະນະກົນໄກການແບ່ງວຽກ, ປະສານງານ ແລະ ຕິດຕາມບັນດາອົງການລັດ ໃນການຈັດຕັ້ງປະຕິບັດສິດທາງກົດໝາຍ ແລະ ລະຫວ່າງບັນດາອົງການ, ການຈັດຕັ້ງໃນການເຄື່ອນໄຫວຂົງເຂດຍຸຕິທໍາ ຕອບສະໜອງຄວາມຕ້ອງການໃນການກໍ່ສ້າງ, ບູລະນະລັດແຫ່ງອໍານາດກົດໝາຍສັງຄົມນິຍົມຫວຽດນາມ”; ປະກອບຄໍາເຫັນຕໍ່ຮ່າງລາຍງານຫົວຂໍ້ທີ 12: “ປັບປຸງບູລະນະກົນໄກການປົກປ້ອງລັດຖະທໍາມະນູນ ຕອບສະໜອງຄວາມຕ້ອງການໃນການກໍ່ສ້າງ, ບູລະນະລັດແຫ່ງອໍານາດກົດໝາຍສັງຄົມນິຍົມຫວຽດນາມ”; ລາຍງານການກະກຽມຮ່າງຫົວຂໍ້ທີ 9: “ຍຸດທະສາດການກໍ່ສ້າງ, ປັບປຸງບູລະນະລະບົບກົດໝາຍ ແລະ ອົງການຈັດຕັ້ງປະຕິບັດກົດໝາຍຮອດປີ 2030, ທິດທາງຮອດປີ 2045 ຕອບສະໜອງຄວາມຕ້ອງການໃນການກໍ່ສ້າງ, ບູລະນະລັດແຫ່ງອໍານາດກົດໝາຍສັງຄົມນິຍົມຫວຽດນາມ” ແລະ ຫົວຂໍ້ທີ 11: “ປ່ຽນແປງໃໝ່ການຈັດຕັ້ງ, ຍົກສູງຄຸນນະພາບການເຄື່ອນໄຫວຂອງສະພາແຫ່ງຊາດ ຕອບສະໜອງຄວາມຕ້ອງການໃນການກໍ່ສ້າງ, ບູລະນະລັດແຫ່ງອໍານາດກົດໝາຍສັງຄົມນິຍົມຫວຽດນາມ”.

ວັນທີ 20/10/2021, ສະພາແຫ່ງຊາດຫວຽດນາມ ໄດ້ໄຂກອງປະຊຸມສະໄໝວິສາມັນ ເທື່ອທີ 2 ຂອງສະພາຊຸດທີ XV ໂດຍການເປັນປະທານ ຂອງ ສະຫາຍ ເວືອງ ດິ່ງເຫວະ, ປະທານສະພາແຫ່ງຊາດຫວຽດນາມ, ມີບັນດາສະມາຊິກສະພາແຫ່ງຊາດ ແລະ ບັນດາການນໍາຂັ້ນສູງພັກ- ລັດ ເຂົ້າຮ່ວມ. ກອງປະຊຸມ ໄດ້ພິຈາລະນາ, ປະກອບຄໍາເຫັນ ແລະ ຮັບຮອງເອົາບັນດາຮ່າງກົດໝາຍ; ບັນດາບົດລາຍງານຂອງລັດຖະບານກ່ຽວກັບ ການຕີລາຄາຜົນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ຄາດຄະເນແຜນງົບປະມານແຫ່ງລັດ ປີ 2021; ພິຈາລະນາ ແລະ ຕົກລົງແຜນພັດທະນາເສດຖະກິດ-ສັງຄົມ ປີ 2022, ຄາດຄະເນແຜນງົບປະມານແຫ່ງລັດ ແລະ ທິດທາງການຈັດສັນງົບປະມານສູນກາງປີ 2022 ແລະ ແຜນການການເງິນ - ງົບປະມານແຫ່ງລັດ 3 ປີ 2022 - 2024; ເລື່ອນກໍານົດການຈັດຕັ້ງປະຕິບັດການປະຕິຮູບນະໂຍບາຍເງິນເດືອນ ຕາມມະຕິຂອງສູນກາງພັກ ແລະ ສະພາແຫ່ງຊາດ; ວຽກງານປ້ອງກັນ, ຕ້ານພະຍາດໂຄວິດ-19 ແລະ ສະພາບການປະຕິບັດ ມະຕິເລກທີ 30/2021/QH15 ກອງປະຊຸມສະໄໝສາມັນ ເທື່ອທີ 1 ສະພາແຫ່ງຊາດ ຊຸດທີ XV; ພິຈາລະນາ, ຕົກລົງແຜນການປະຕິຮູບຄືນພື້ນຖານເສດຖະກິດໄລຍະ 2021-2025, ແຜນງານນໍາໃຊ້ທີ່ດິນແຫ່ງຊາດ ໄລຍະ 2021-2030, ວິໄສທັດຮອດປີ 2050 ແລະ ແຜນການນໍາໃຊ້ທີ່ດິນ ໄລຍະ 5 ປີ (2021-2025) ແລະ ພິຈາລະນາບາງບັນຫາສໍາຄັນອື່ນໆອີກຈໍານວນ.

**2) ພັກກອມມູນິດຈີນ**

ວັນທີ 08/10/2021, ທ່ານ ສີ ຈິ້ນຜິງ, ເລຂາທິການໃຫຍ່, ປະທານປະເທດຈີນ ໄດ້ສົນທະນາຜ່ານທາງໂທລະ ສັບກັບ ນາຍົກລັດຖະມົນຕີຍີ່ປຸ່ນ Fumio Kishida. ທ່ານ ສີຈິ້ນຜິງ ໄດ້ເນັ້ນ 04 ຂໍ້ ຄື: 1) ຈິງຈັງຖອດຖອນ

ບົດຮຽນຈາກປະສົບການໃນທາງບວກ ແລະ ທາງລົບ ຂອງສາຍພົວພັນລະຫວ່າງສອງປະເທດ, ປະຕິບັດຢ່າງເຂັ້ມງວດ ບັນດາຫຼັກການພົວພັນທີ່ໄດ້ວາງອອກໃນເອກະສານການເມືອງ 4 ສະບັບ ຂອງສອງປະເທດ, ຈັດຕັ້ງປະຕິບັດຢ່າງມີປະສິດທິຜົນກ່ຽວກັບຄວາມເປັນເອກະພາບດ້ານການເມືອງທີ່ວ່າ ຈີນ ແລະ ຍີ່ປຸ່ນ ແມ່ນຄູ່ຮ່ວມມື ແລະ ບໍ່ແມ່ນໄພຂົ່ມຂູ່ຕໍ່ກັນ; 2) ສອງຝ່າຍຄວນບໍລິຫານຈັດການຢ່າງເໝາະສົມ ບັນດາບັນຫາຫຼໍ່ແຫຼມ ເຊັ່ນ: ບັນຫາດ້ານປະຫວັດສາດ ແລະ ບັນຫາທີ່ກ່ຽວຂ້ອງກັບ ໄຕຫວັນ, ບໍລິຫານຄວາມເຫັນທີ່ແຕກຕ່າງກັນ ມຸ່ງໄປສູ່ເສັ້ນທາງທີ່ຖືກຕ້ອງ ເພື່ອຮັກສາພື້ນຖານດ້ານການເມືອງ ແລະ ສະພາບການພົວພັນໂດຍລວມຂອງສອງຝ່າຍ; 3) ສອງຝ່າຍຄວນຮັດແໜ້ນການແລກປ່ຽນດ້ານການບໍລິຫານປະເທດ ແລະ ການປະສານງານດ້ານນະໂຍບາຍເສດຖະກິດ, ຮ່ວມກັນຮັກສາສະພາບແວດລ້ອມທີ່ເປີດກວ້າງ ແລະ ເປັນທຳ ສຳລັບການຄ້າ ແລະ ການລົງທຶນ; 4) ສອງຝ່າຍຄວນປະຕິບັດຫຼັກການຫລາຍຝ່າຍຢ່າງແທ້ຈິງ, ສົ່ງເສີມການຮ່ວມມື ລະຫວ່າງພາກພື້ນ ເພື່ອຮັບມືກັບສິ່ງທ້າທາຍຂອງໂລກ, ປົກປັກຮັກສາສັນຕິພາບ,ສະຖຽນລະພາບ ແລະ ການພັດທະນາ ບົນພື້ນຖານເຄົາລົບຜົນປະໂຫຍດອັນເປັນພື້ນຖານຂອງມວນມະນຸດ.

ວັນທີ 27 ຕຸລາ 2021, ກອງປະຊຸມສຸດຍອດອາຊຽນ-ຈີນ ຄັ້ງທີ 24, ສະຫາຍ ຫຼີເຄີ້ສຽງ, ນາຍົກລັດຖະມົນຕີຈີນ ໄດ້ສະເໜີກ່ຽວກັບການຮ່ວມມືລະຫວ່າງຈີນ-ອາຊຽນ ໃນໄລຍະຕໍ່ໄປ 6 ຂໍ້ ຄື: 1) ສ້າງເສັ້ນທາງປ້ອງກັນສຸຂະພາບ ເພື່ອເພີ່ມທະວີການສື່ສານ ແລະ ການປະສານງານນະໂຍບາຍຕ້ານການແຜ່ລະບາດຂອງພະຍາດ; 2) ລົງເລິກການເຊື່ອມໂຍງດ້ານເສດຖະກິດຢ່າງເລິກເຊິ່ງ, ຊຸກຍູ້ການມີຜົນບັງຄັບໃຊ້ໃນໄລຍະຕົ້ນຂອງສັນຍາຄູ່ຮ່ວມມືເສດຖະກິດຮອບດ້ານໃນພາກພື້ນ (RCEP) ແລະ ໃຫ້ຜົນປະໂຫຍດແກ່ປະຊາຊົນທຸກປະເທດໃນພາກພື້ນໂດຍໄວ; 3) ຊຸກຍູ້ການພັດທະນາລວມ, ເລັ່ງລັດສ້າງການພົວພັນຄູ່ຮ່ວມມືເສດຖະກິດສີຟ້າ, ເພີ່ມທະວີການຮ່ວມມືພັດທະນາສາກົນ, ສ້າງຕັ້ງສະຖາບັນວິຊາສະເພາະຢູ່ບັນດາປະເທດອາຊຽນ, ສ້າງສະຖານທີ່ສາທິດການຮ່ວມມືພັດທະນາ; 4) ຍຶດໝັ້ນໃນນະວັດຕະກຳທີ່ຂັບເຄື່ອນ, ປະຕິບັດແຜນການຄູ່ຮ່ວມມືນະວັດຕະກຳວິທະຍາສາດເຕັກໂນໂລຊີໃນ 5 ປີຕໍ່ໜ້າ, ຄົ້ນຄວ້າການພັດທະນາການຮ່ວມມືດ້ານການອອກແບບອຸດສາຫະກຳຈີນ-ອາຊຽນ ໃຫ້ສຳເລັດການສ້າງແຜນການປະຕິບັດການພົວພັນຄູ່ຮ່ວມມືເສດຖະກິດດິຈິຕອນຈີນ-ອາຊຽນ (2021-2025) ໃຫ້ໄວທີ່ສຸດເທົ່າທີ່ຈະໄວໄດ້; 5) ເປີດກວ້າງການຮ່ວມມືສີຂຽວ, ປະຕິບັດ "ແຜນຍຸດທະສາດ ແລະ ແຜນປະຕິບັດງານດ້ານການຮ່ວມມືດ້ານສິ່ງແວດລ້ອມ ຈີນ-ອາຊຽນ (2021-2025)"; ແລະ 6) ຮັດແໜ້ນພື້ນຖານຄວາມເຫັນຂອງປະຊາຊົນ, ບົນພື້ນຖານການຮັບປະກັນຄວາມປອດໄພໃນການປ້ອງກັນພະຍາດ, ສະເໜີສ້າງກົນໄກການພົບປະເຈົ້າໜ້າທີ່ອາວຸໂສດ້ານການສຶກສາຈີນ-ອາຊຽນ ເຊັ່ນ: ທຶນການສຶກສາຊັ້ນສູງ ຈີນ-ອາຊຽນ, ສືບຕໍ່ເພີ່ມທຶນໃຫ້ກອງທຶນຮ່ວມມື ຈີນ-ອາຊຽນ. ນອກນັ້ນ, ກອງປະຊຸມຍັງໄດ້ອອກ "ຖະແຫຼງ ການຮ່ວມ ຈີນ-ອາຊຽນ ວ່າດ້ວຍການຮ່ວມມື ແລະ ການສະໜັບສະໜູນຂອບການຟື້ນຟູເສດຖະກິດຮອບດ້ານຂອງອາຊຽນ" ແລະ "ຖະແຫຼງການຮ່ວມ ກ່ຽວກັບການເພີ່ມທະວີການຮ່ວມມືພັດທະນາສີຂຽວ ແລະ ສີຂຽວຈີນ-ອາຊຽນ".

ວັນທີ 06/10/2021, ທ່ານ Yang JieChi, ກຳມະການກົມການເມືອງສູນກາງພັກ, ຫົວໜ້າຫ້ອງການຄະນະກຳມະການວຽກງານຕ່າງປະເທດສູນກາງພັກກອມມູນິດຈີນ ແລະ ທ່ານ Jake Sullivan, ທີ່ປຶກສາດ້ານຄວາມໝັ້ນຄົງຂອງ ອາເມລິກາ ໄດ້ພົບປະສອງຝ່າຍ ທີ່ເມືອງ ຊູຣິກ, ປະເທດສະວິດ. ສອງຝ່າຍ ເຫັນດີຈັດຕັ້ງຜັນຂະຫຍາຍເນື້ອໃນຈິດໃຈ ທີ່ສອງຜູ້ນຳຂອງສອງປະເທດໄດ້ສົນທະນາ-ຕົກລົງຜ່ານທາງໂທລະສັບ ໃນເດືອນ ກັນຍາ 2021 ຜ່ານມາ ເພື່ອຟື້ນຟູສາຍພົວພັນຮ່ວມມືຕາມແນວທາງທີ່ຖືກຕ້ອງ ແລະ ເພີ່ມທະວີການຕິດຕໍ່ສື່ສານ, ບໍ່ກົດໜ່ວງສາຍພົວພັນຂອງສອງຝ່າຍ; ແລກປ່ຽນບັນຫາການປ່ຽນແປງດິນຟ້າອາກາດ, ບັນຫາພາກພື້ນ-ສາກົນ ແລະ ປຶກສາຫາລືກະກຽມໃຫ້ແກ່ການພົບປະທາງໄກ ຂອງສອງຜູ້ນຳສູງສຸດ ໃນທ້າຍປີ 2021. ທ່ານ Yang JieChi ໄດ້ສະແດງຈຸດຢືນຕໍ່ບັນຫາທີ່ພົວພັນເຖິງ ໄຕຫວັນ, ຮົງກົງ, ຊິນຈຽງ, ຕິເບດ, ບັນຫາທະເລຈີນໃຕ້ ແລະ ບັນຫາສິດທິມະນຸດອື່ນໆ ໂດຍຮຽກຮ້ອງໃຫ້ ອາເມລິກາ ເຄົາລົບອະທິປະໄຕ, ຄວາມໝັ້ນຄົງ ແລະ ຜົນປະໂຫຍດຂອງຈີນ, ຢຸດແຊກແຊງກິດຈະການພາຍໃນຂອງຈີນ, ເຄົາລົບເຊິ່ງກັນ ແລະ ກັນ , ຢູ່ຮ່ວມກັນໂດຍສັນຕິ ແລະ ຮ່ວມມືຕ່າງຝ່າຍຕ່າງມີຜົນປະໂຫຍດ.

### 3) ພັກແຮງງານເກົາຫຼີ

Yonhap, ວັນທີ 04/10/2021, ສປປ ເກົາຫຼີ ແລະ ສ.ເກົາຫຼີ ໄດ້ຕົກລົງຟື້ນຟູການສື່ສານສາຍດ່ວນຂອງສອງເກົາຫຼີ ເພື່ອເພີ່ມທະວີສາຍພົວພັນຮ່ວມມືຂອງສອງເກົາຫຼີ, ສອງຝ່າຍເຫັນດີປະສານງານກັນ 02 ຄັ້ງຕໍ່ວັນ ຄື ເວລາ

9 ໂມງເຊົ້າ ແລະ ເວລາ 5 ໂມງແລງ. ພ້ອມກັນນັ້ນ, ລັດຖະມົນຕີປ້ອງກັນປະເທດ ສ.ເກົາຫຼີ ມີຄໍາເຫັນວ່າ ການຟື້ນຟູການສື່ສານລະຫວ່າງສອງເກົາຫຼີ ຈະຊ່ວຍໃຫ້ຫຼຸດຜ່ອນຄວາມເຄັ່ງຕຶງທາງດ້ານການທະຫານລະຫວ່າງສອງຝ່າຍ.

ວັນທີ 11/10/2021, ສະຫາຍ ກິມ ເຈິງອຸນ, ເລຂາທິການໃຫຍ່ພັກແຮງງານເກົາຫຼີ ໄດ້ກ່າວຄໍາປາໄສ ເນື່ອງໃນໂອກາດວັນສ້າງຕັ້ງພັກແຮງງານເກົາຫຼີ ຄົບຮອບ 76 ປີ ກ່ຽວກັບການພັດທະນາວຽກງານ ຂອງພັກ ຕາມຄວາມຕ້ອງການໃນໄລຍະໃໝ່ໃນການກໍ່ສ້າງສັງຄົມນິຍົມ. ພັກແຮງງານເກົາຫຼີ ໄດ້ມີປະຫວັດສາດຍາວນານຕະຫຼອດໄລຍະຜ່ານມາ, ເປັນພັກກໍາອໍານາດ ນໍາພາປະເທດເດີນຕາມອຸດົມການສັງຄົມນິຍົມ; ພັກແຮງງານເກົາຫຼີ ໄດ້ນໍາພາທີ່ໂດດເດັ່ນໃນການຕໍ່ສູ້ການປະຕິວັດເກົາຫຼີ ໄດ້ຮັບໄຊຊະນະ, ພັກໄດ້ຕໍ່ສູ້ເພື່ອປະຊາຊົນພາຍໃຕ້ແນວຄິດຈຸເຊ ທີ່ຖືເອົາປະຊາຊົນເປັນກົກ, ລົງເລິກ ແລະ ພັດທະນາ ເພື່ອໃຫ້ສອດຄ່ອງກັບຍຸກສະໄໝ. ໃນພິທີດັ່ງກ່າວ, ຍັງມີການວາງສະແດງອາວຸດຍຸດໂທປະກອນຕ່າງໆ, ການສະແດງການຕໍ່ສູ້ຂອງທະຫານພິເສດ, ສິລະປະ - ວັນນະຄະດີ ແລະ ການສະແດງອື່ນໆ.

**4) ພັກກອມມູນິດກູບາ**

ວັນທີ 02 ຕຸລາ 2021 ພັກກອມມູນິດກູບາ ຮ່ວມກັບບັນດາພັກການເມືອງ ແລະ ອົງການຈັດຕັ້ງ ໃນອາຊີຕາເວັນອອກສຽງໃຕ້ ໄດ້ຈັດກອງປະຊຸມສາກົນທາງໄກ ຄັ້ງທີ II ໃນຫົວຂໍ້ “ກູບາຈະຊະນະ - Cuba will win’’; ເພື່ອປະນາມມາດຕະການປິດລ້ອມຝ່າຍດຽວ ຂອງອາເມລິກາ ຕໍ່ກູບາ. ກອງປະຊຸມຄັ້ງນີ້, ເປັນປະທານໂດຍ ສະຫາຍ Juan Carlos Marsán, ຮອງຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກກອມມູນິດກູບາ ແລະ ມີຜູ້ເຂົ້າຮ່ວມຈາກຕາງໜ້າສະຖາບັນມິດຕະພາບ ເພື່ອຄວາມສາມັກຄີກັບປະຊາຊົນກູບາ, ສະຫະພັນຊາວໜຸ່ມກອມມູນິດກູບາ, ອົງການຈັດຕັ້ງສາກົນ, ອະດີດນັກສຶກສາທີ່ຈົບຈາກມະຫາວິທະຍາໄລກູບາ ແລະ ຂະບວນການເຄື່ອນໄຫວ ເພື່ອຄວາມສາມັກຄີກັບປະຊາຊົນກູບາ (ICAP) ຂອງ ຫວຽດນາມ, ກໍາປູເຈຍ, ມາເລເຊຍ, ອິນໂດເນເຊຍ, ຟີລິບປິນ, ໄທ ແລະ ຕີມໍເລັດສເຕ. ສະຫາຍ Juan Carlos Marsán ໄດ້ແຈ້ງໃຫ້ຊາບໂດຍຫຍໍ້ ກ່ຽວກັບ ຜົນສໍາເລັດຂອງກອງປະຊຸມໃຫຍ່ຄັ້ງທີ VIII ຂອງພັກ, ໂດຍສະເພາະແມ່ນການຮັບຮອງເອົາແຜນພັດທະນາ ເສດຖະກິດ-ສັງຄົມ ໄລຍະປີ 2021-2025 ແລະ ວິໄສທັດ ຮອດປີ 2030 ຕາມຮູບແບບເສດຖະກິດສັງຄົມນິຍົມກູບາ ແລະ ສະພາບຄວາມຫຍຸ້ງຍາກ ໃນການພັດທະນາເສດຖະກິດ-ສັງຄົມຂອງ ກູບາ ທ່າມກາງການແຜ່ລະບາດຂອງເຊື້ອພະຍາດໂຄວິດ-19 ແລະ ການເພີ່ມທະວີການປິດລ້ອມຂອງ ອາເມລິກາ ທີ່ນັບມື້ນັບເພີ່ມຂຶ້ນ ຕະຫຼອດໄລຍະກວ່າ 60 ປີ ຜ່ານມາ, ຊຶ່ງເປັນອຸປະສັກໃນການສ້າງສາພັດທະນາປະເທດຊາດ ແລະ ໄດ້ສ້າງຄວາມເສຍຫາຍໃຫ້ແກ່ເສດຖະກິດກູບາ ຢ່າງມະຫາສານ.

ແຫຼ່ງຂ່າວອ້າງອີງ : Vietnam News, Vietnam- Express, Xinhua, CNA, Global Times, RT,South China Morning Post, Kpl, Sputnik, Khmer Times, Yonhap, Rodong Sinnum, Kyodo, BBC, Euronews, AFP, CNBC,NHK, Aljazeera, CGTN, TaiwanNews, TNN, Daily News.

# II. ການເຄື່ອນໄຫວວຽກງານ ຂອງການນຳພັກ ປປ ລາວ

**1. ສະຫາຍ ເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກ ປະຊາຊົນ ປະຕິວັດລາວ ສົ່ງສານອວຍພອນ ເຖິງ ເລຂາທິການໃຫຍ່ພັກແຮງງານເກົາຫຼີ ເນື່ອງໃນໂອກາດວັນສ້າງຕັ້ງພັກແຮງງານເກົາຫຼີ ຄົບຮອບ 76 ປີ.**

ວັນທີ 8 ຕຸລາ 2021, ສະຫາຍ ທອງລຸນ ສີສຸລິດ, ເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ, ປະທານປະເທດແຫ່ງ ສປປ ລາວ ໄດ້ສົ່ງໂທລະເລກອວຍພອນເຖິງ ສະຫາຍ ກິມເຈິງອຸນ, ເລຂາທິການໃຫຍ່ພັກແຮງງານເກົາຫຼີ, ປະທານກິດຈະການແຫ່ງລັດ, ປະທານຄະນະກຳມະການທະຫານສູນກາງ ສປປ ເກົາຫຼີ, ເນື່ອງໃນໂອກາດວັນສ້າງຕັ້ງພັກແຮງງານເກົາຫຼີ ຄົບຮອບ 76 ປີ (10/10/1945-10/10/2021), ຊຶ່ງມີເນື້ອໃນດັ່ງນີ້: ຂ້າພະເຈົ້າ ຂໍສະແດງຄວາມຂໍ່ານັບຊົມເຊີຍອັນອົບອຸ່ນ ແລະ ສົ່ງຄໍາອວຍພອນໄຊອັນປະເສີດມາຍັງ ສະຫາຍພ້ອມດ້ວຍບັນດາສະຫາຍ ໃນຄະນະບໍລິຫານງານສູນກາງພັກແຮງງານເກົາຫຼີ, ສະມາຊິກພັກ ແລະ ປະຊາຊົນ ແຫ່ງສາທາລະນະລັດ ປະຊາຊົນ ປະຊາທິປະໄຕ ເກົາຫຼີ ອ້າຍນ້ອງທຸກຖ້ວນໜ້າ. ຕະຫຼອດໄລຍະ 76 ປີ ຜ່ານມາ ພາຍໃຕ້ການຊີ້ນໍາ-ນໍາພາອັນເດັດດ່ຽວໜຽວແໜ້ນ ຂອງພັກແຮງງານເກົາຫຼີ ອັນມີ ປະທານ ກິມອິນຊຸງ ແລະ ສະຫາຍ ກິມເຈິງອິນ, ຜູ້ນໍາທີ່ຍິ່ງໃຫຍ່ໃນເມື່ອກ່ອນ ຂອງ ປະຊາຊົນ ສປປ ເກົາຫຼີ ກໍ່ຄື ສະຫາຍ ກິມເຈິງອຸນ ທີ່ເປັນຜູ້ສືບທອດພາລະກິດ ໃນປັດຈຸບັນ, ສປປ ເກົາຫຼີ ແລະ ປະຊາຊົນ ສປປ ເກົາຫຼີ ອ້າຍນ້ອງ ສາມາດຍາດໄດ້ຜົນສໍາເລັດອັນໃຫຍ່ຫຼວງຫຼາຍດ້ານ ໃນການປົກປັກຮັກສາໝາກຜົນ ຂອງການປະຕິວັດໄວ້ໄດ້ຢ່າງໝັ້ນຄົງ, ການເມືອງມີສະຖຽນລະພາບ, ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ມີຄວາມໜັກແໜ້ນ ແລະ ເຕີບໃຫຍ່ເຂັ້ມແຂງ, ເສດຖະກິດນັບມື້ນັບໄດ້ຮັບການພັດທະນາ, ຊີວິດການເປັນຢູ່ ຂອງປະຊາຊົນ ໄດ້ຮັບການປັບປຸງດີຂຶ້ນເທື່ອລະກ້າວ, ການພົວພັນຕ່າງປະເທດນັບມື້ນັບໄດ້ຮັບການເປີດກວ້າງ, ບົດບາດຂອງ ສປປ ເກົາຫຼີ ນັບມື້ນັບໄດ້ຮັບການຍົກສູງຂຶ້ນໃນເວທີພາກພື້ນ ແລະ ສາກົນ. ເຊື່ອໝັ້ນວ່າ ພາຍໃຕ້ການຊີ້ນໍາ-ນໍາພາຂອງ ພັກແຮງງານເກົາຫຼີ, ພັກ, ລັດ ແລະ ປະຊາຊົນ ສປປ ເກົາຫຼີ ຈະສາມາດບັນລຸຜົນສໍາເລັດ ໃນການປະຕິບັດບັນດາມະຕິຂອງກອງປະຊຸມໃຫຍ່ ຄັ້ງທີ VIII ຂອງພັກ, ສືບຕໍ່ຊີ້ນໍາ ນໍາພາປະຊາຊົນ ສປປ ເກົາຫຼີ ຍາດໄດ້ຜົນສໍາເລັດອັນໃຫຍ່ ໃນພາລະກິດແຫ່ງການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ, ສ້າງສັງຄົມນິຍົມໃຫ້ຮັ່ງມີເຂັ້ມແຂງ ແລະ ບັນລຸຜົນສໍາເລັດ ໃນການທ້ອນໂຮມປະເທດຊາດໂດຍສັນຕິວິທີ. ຂໍອວຍພອນໃຫ້ ສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນເປັນມູນເຊື້ອ ທີ່ມີມາແຕ່ດົນນານລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ສປປ ລາວ-ສປປ ເກົາຫຼີ ຈົ່ງສືບຕໍ່ໄດ້ຮັບການເສີມຂະຫຍາຍຍິ່ງໆຂຶ້ນ ເພື່ອຜົນປະໂຫຍດຂອງປະຊາຊົນສອງຊາດ ກໍ່ຄື ພາລະກິດສັນຕິພາບ, ມິດຕະພາບ ແລະ ການຮ່ວມມື ເພື່ອການພັດທະນາໃນພາກພື້ນ ແລະ ໃນໂລກ.

**2. ພະນະທ່ານ ທອງລຸນ ສີສຸລິດ, ເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກ ປະຊາຊົນ ປະຕິວັດລາວ ສົ່ງສານຊົມເຊີຍ ເຖິງ ພະນະທ່ານ Fumio KISHIDA, ປະທານພັກເສລີປະຊາທິປະໄຕ ຍີ່ປຸ່ນ ຄົນໃໝ່**

ໃນວັນທີ 01 ຕຸລາ 2021, ພະນະທ່ານ ທອງລຸນ ສີສຸລິດ ເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກປະຊາຊົນ ປະຕິວັດລາວ ສົ່ງສານຊົມເຊີຍເຖິງ ພະນະທ່ານ Fumio KISHIDA, ປະທານພັກເສລີປະຊາທິປະໄຕຍີ່ປຸ່ນ ໃນໂອກາດໄດ້ຖືກເລືອກຕັ້ງໃຫ້ດໍາລົງຕໍາແໜ່ງເປັນປະທານພັກເສລີປະຊາທິປະໄຕຍີ່ປຸ່ນ ຄົນໃໝ່, ຊຶ່ງມີເນື້ອໃນດັ່ງນີ້:

ເນື່ອງໃນໂອກາດທີ່ ພະນະທ່ານ Fumio KISHIDA ໄດ້ຖືກເລືອກຕັ້ງໃຫ້ດໍາລົງຕໍາແໜ່ງເປັນປະທານພັກເສລີປະຊາທິປະໄຕ ຍີ່ປຸ່ນ ຄົນໃໝ່, ໃນນາມຕາງໜ້າໃຫ້ ຄະນະບໍລິຫານງານສູນກາງພັກ ປະຊາຊົນ ປະຕິວັດລາວ ແລະ ໃນນາມສ່ວນຕົວ ຂໍສະແດງຄວາມຊົມເຊີຍຢ່າງຈິງໃຈ ແລະ ສົ່ງຄໍາອວຍພອນໄຊອັນປະເສີດ ມາຍັງ ພະນະທ່ານ Fumio KISHIDA. ການທີ່ພະນະທ່ານໄດ້ຮັບເລືອກຕັ້ງໃຫ້ດໍາລົງຕໍາແໜ່ງອັນມີກຽດນີ້, ສະແດງໃຫ້ເຫັນເຖິງຄວາມໄວ້ວາງໃຈ ແລະ ຄວາມເຊື່ອໝັ້ນຂອງທົ່ວພັກເສລີປະຊາທິປະໄຕ ຍີ່ປຸ່ນ ທີ່ມີຕໍ່ພະນະທ່ານ. ພ້ອມດຽວກັນນັ້ນ, ພະນະທ່ານ ທອງລຸນ ສີສຸລິດ ຍັງໄດ້ຢືນຢັນຄວາມພ້ອມທີ່ຈະເຮັດວຽກຢ່າງໃກ້ຊິດຮ່ວມກັບ ພະນະທ່ານ Fumio KISHIDA ເພື່ອສືບຕໍ່ເສີມຂະຫຍາຍສາຍພົວພັນມິດຕະພາບ ລະຫວ່າງ ພັກປະຊາຊົນ ປະຕິວັດລາວ ແລະ ພັກເສລີ

ປະຊາທິປະໄຕຍີ່ປຸ່ນ ແລະ ສາຍພົວພັນຄູ່ຮ່ວມຍຸດທະສາດ ລະຫວ່າງ ສປປ ລາວ ແລະ ຍີ່ປຸ່ນ ໃຫ້ແຕກດອກອອກຜົນຍິ່ງໆຂຶ້ນ ເພື່ອຜົນປະໂຫຍດ ຂອງ ປະຊາຊົນສອງຊາດ ລາວ ແລະ ຍີ່ປຸ່ນ ກໍຄື ເພື່ອສັນຕິພາບ, ມິດຕະພາບ ແລະ ການຮ່ວມມື ເພື່ອການພັດທະນາໃນພາກພື້ນ ແລະ ໃນໂລກ.

## 3. ກອງປະຊຸມພົບປະທາງໄກ ລະຫວ່າງ ສອງຜູ້ປະຈໍາການຄະນະເລຂາທິການສູນກາງພັກ ລາວ-ຫວຽດນາມ



ວັນທີ 15 ຕຸລາ 2021, ສະຫາຍ ບຸນທອງ ຈິດມະນີ, ກໍາມະການກົມການເມືອງສູນກາງພັກ, ຜູ້ປະຈໍາການຄະນະເລຂາທິການສູນກາງພັກ ປປ ລາວ, ຮອງປະທານປະເທດ ແຫ່ງ ສປປ ລາວ ໄດ້ເຂົ້າຮ່ວມກອງປະຊຸມພົບປະທາງໄກກັບ ສະຫາຍ ຫວໍວັນເຖືອງ, ກໍາມະການກົມການເມືອງສູນກາງພັກ, ຜູ້ປະຈໍາການຄະນະເລຂາທິການສູນກາງພັກກອມມູນິດຫວຽດນາມ, ມີບັນດາສະຫາຍ ຄະນະນໍາຂອງບັນດາສໍານັກງານອ້ອມຂ້າງສູນກາງພັກ, ສະຖາບັນ, ກະຊວງ, ອົງການທີ່ກ່ຽວຂ້ອງຂອງສອງຝ່າຍ ລາວ-ຫວຽດນາມ ແລະ ເອກອັກຄະລັດຖະທູດຂອງສອງປະເທດ ເຂົ້າຮ່ວມ. ສອງຝ່າຍ ໄດ້ແລກປ່ຽນສະພາບການພົ້ນເດັ່ນຂອງແຕ່ລະພັກ, ແຕ່ລະປະເທດ ກໍຄື ສະພາບການພັດທະນາເສດຖະກິດ-ສັງຄົມ ແລະ ມາດຕະການຮັບມືກັບການແຜ່ລະບາດ ຂອງ ພະຍາດໂຄວິດ-19 ຢູ່ລາວ ແລະ ຫວຽດນາມໃນປະຈຸບັນ; ຕີລາຄາສະພາບການຮ່ວມມື ລະຫວ່າງ ສອງພັກ, ສອງປະເທດ ໃນໄລຍະຜ່ານມາ, ວາງທິດທາງການຮ່ວມມືໃນຕໍ່ໜ້າ ທີ່ພົວພັນເຖິງການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກປະຊາຊົນປະຕິວັດລາວ ແລະ ມະຕິກອງປະຊຸມໃຫຍ່ ຄັ້ງທີ XIII ຂອງພັກກອງມູນິດຫວຽດນາມ ເຂົ້າໃນຊີວິດສັງຄົມຕົວຈິງຢ່າງເປັນຂະບວນຟົດຟື້ນ ແລະ ຊຸກຍູ້ການປະຕິບັດບັນດາບົດບັນທຶກຂອງ ການນໍາຂັ້ນສູງຂອງສອງພັກ, ສອງປະເທດໃຫ້ມີປະສິດທິຜົນສູງກວ່າເກົ່າ. ພ້ອມນັ້ນ, ສອງຝ່າຍ ຍັງໄດ້ແລກປ່ຽນບົດຮຽນນໍາກັນ ໃນວຽກງານກໍ່ສ້າງພັກ, ວຽກງານການຕ້ານ-ສະກັດກັ້ນການສໍ້ລາດບັງຫຼວງ ແລະ ວຽກງານການຕິດຕາມ, ກວດກາ ແລະ ການລົງວິໄນພັກ; ໄດ້ປຶກສາຫາລືເປັນເອກະພາບກັນ ເພື່ອກະກຽມບັນດາກິດຈະກໍາຕ່າງໆ ໃນການສະເຫຼີມສະຫຼອງປີສາມັກຄີມິດຕະພາບ ລາວ-ຫວຽດນາມ ແລະ ສະເຫຼີມສະຫຼອງວັນສ້າງຕັ້ງສາຍພົວພັນການທູດ ລາວ-ຫວຽດນາມ ຄົບຮອບ 60 ປີ ແລະ ວັນເຊັນສົນທິສັນຍາມິດຕະພາບ ແລະ ການຮ່ວມມື ລາວ-ຫວຽດນາມ ຄົບຮອບ 45 ປີ ໃນປີ 2022. ສອງຝ່າຍ ຍິນດີສືບຕໍ່ປະສານສົມທົບກັນຢ່າງແໜ້ນແຟ້ນໃນພາລະກິດປົກປັກຮັກສາ ແລະ ເພີ່ມພູນຄູນສ້າງສາຍພົວພັນມິດຕະພາບອັນຫຍິ່ງໃຫຍ່, ຄວາມສາມັກຄີແບບພິເສດ ແລະ ການຮ່ວມມືຮອບດ້ານ ລາວ - ຫວຽດນາມ ໃຫ້ນັບມື້ໄດ້ຮັບການເສີມຂະຫຍາຍເຂົ້າສູ່ລວງເລິກ, ແທດຕົວຈິງ ແລະ ມີປະສິດທິຜົນ, ເພື່ອຜົນປະໂຫຍດຂອງປະຊາຊົນສອງຊາດ, ເພື່ອສັນຕິພາບ, ມິດຕະພາບ, ການຮ່ວມມື ແລະ ພັດທະນາໃນພາກພື້ນ ແລະ ໃນໂລກ.

# III. ການເຄື່ອນໄຫວຂອງອົງການຈັດຕັ້ງມະຫາຊົນ ຄຕພ

## 1. ຊາວໜຸ່ມຄະນະພົວພັນຕ່າງປະເທດສູນກາງພັກ ເຂົ້າຮ່ວມພິທີສະເຫຼີມສະຫຼອງວັນເດັກນ້ອຍສາກົນ




ວັນທີ 11 ຕຸລາ 2021, ສະມາຊິກຊາວໜຸ່ມ ຄະນະພົວພັນຕ່າງປະເທດສູນກາງພັກ ນໍາໂດຍ ສະຫາຍ ນາງ ສຸກອາດສະໜາ ວົງສັກ, ຮອງເລຂາຄະນະບໍລິຫານງານຊາວໜຸ່ມຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ເຂົ້າຮ່ວມພິທີສະເຫຼີມສະຫຼອງວັນເດັກນ້ອຍສາກົນ ທີ່ຄະນະບໍລິຫານງານຊາວໜຸ່ມ ປະຊາຊົນປະຕິວັດລາວ ຮ່ວມກັບກອງທຶນປະຊາກອນ ສະຫະປະຊາຊາດ ປະຈໍາລາວ, ອົງການການແພດສາກົນ, ອົງການຊ່ວຍເຫຼືອເດັກນ້ອຍສາກົນ, ອົງການສາກົນບໍລິການປະຊາຊົນ ຮ່ວມກັນຈັດຂຶ້ນ ພາຍໃຕ້ຫົວຂໍ້ "ນໍາໃຊ້ເຕັກໂນໂລຊີ-ນະວັດຕະກໍາໃໝ່ ໃນການສົ່ງເສີມ ແລະ ການຍົກສູງການພັດທະນາເດັກຍິງ" ໂດຍການເປັນປະທານຂອງ ທ່ານ ອະລຸນໄຊ ສູນນະລາດ, ກໍາມະການສູນກາງພັກ, ເລຂາຄະນະບໍລິຫານງານຊາວໜຸ່ມປະຊາຊົນ ປະຕິວັດລາວ, ມີທ່ານ ມາຣ່ຽນ ເອຄານ, ຜູ້ຕາງໜ້າອົງການ UNFPA ປະຈໍາ ສປປ ລາວ, ທ່ານ ດຣ ນາງ ອິນລາວັນ ແກ້ວບຸນພັນ, ປະທານສູນກາງສະຫະພັນແມ່ຍິງລາວ, ທູຕານຸທູດ, ການນໍາຊາວໜຸ່ມຂັ້ນສູນກາງ, ຂັ້ນແຂວງ ເຂົ້າຮ່ວມຜ່ານຮູບແບບທາງໄກ 200 ກວ່າທ່ານ ເຂົ້າຮ່ວມ.